ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ເມສາ 2026

ປີທີ 15

ສະບັບທີ 1061

ລາຍສັບປະດາ


## ສານອວຍພອນປີໃໝ່ລາວຂອງທ່ານປະທານປະເທດ



ພີ່ນ້ອງຮ່ວມຊາດ, ເພື່ອນມິດທີ່ຮັກແພງທັງຫຼາຍ!

ໃນໂອກາດສິ່ງທ້າຍປີເກົ່າ ປີມະເສັງ ພ.ສ 2568 ແລະ ຕ້ອນຮັບປີໃໝ່ ປີມະເມຍ ພ.ສ 2569 ທີ່ຈະມາເຖິງນີ້, ຂ້າພະເຈົ້າຂໍສົ່ງຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ແລະ ຄຳອວຍພອນອັນປະເສີດ ໄປຍັງພໍ່ແມ່ພີ່ນ້ອງຊາວລາວໃນທົ່ວປະເທດ, ພີ່ນ້ອງຊາວລາວທີ່ກຳລັງດຳລົງຊີວິດຢູ່ຕ່າງປະເທດ ກໍຄືເພື່ອນມິດຊາວຕ່າງປະເທດທີ່ກຳລັງດຳລົງຊີວິດ ແລະ ເຮັດວຽກຢູ່ ສປປລາວ ທຸກທົ່ວໜ້າ.

ພີ່ນ້ອງຮ່ວມຊາດ,ເພື່ອນມິດສະຫາຍທີ່ຮັກແພງ,

ປີມະເສັງທີ່ກຳລັງຈະຜ່ານພົ້ນໄປ ເປັນປີທີ່ມີຄວາມໝາຍສຳຄັນ ແລະ ເປັນປີແຫ່ງຄວາມພາກພູມໃຈຂອງປວງຊົນລາວທັງຊາດ ທີ່ໄດ້ຮ່ວມກັນສະ

ອ່ານຕໍ່ໜ້າ 6



### ແນວຄິດປະທານ
### ໄກສອນ ພົມວິຫານ
### ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນຂະບວນວິວັດແຫ່ງການເຊີດຊູ, ເສີມຂະຫຍາຍປະຊາທິປະໄຕນັ້ນ ພວກເຮົາຕ້ອງຕໍ່ສູ້, ຈຳກັດ, ແກ້ໄຂການກະທຳຕ່າງໆ ທີ່ເປັນການລະເມີດຕໍ່ສິດເປັນເຈົ້າຂອງປະຊາຊົນ, ທ່າອຽງປະຊາທິປະໄຕພຽງແຕ່ຮູບການ, ປະຊາທິປະໄຕເກີນຂອບເຂດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 201)

ຢາກປົກປັກຮັກສາສິດເສລີພາບປະຊາທິປະໄຕຂອງປະຊາຊົນໄດ້ ຕ້ອງສ້າງລະບົບກົດໝາຍ, ກົດໝາຍ ຕ້ອງແມ່ນກົດໝາຍແຫ່ງການຈັດຕັ້ງຂອງສັງຄົມໃໝ່ຢ່າງແທ້ຈິງ, ເປັນຂໍ້ບັງຄັບອັນສັກສິດທີ່ຄອບງຳໃນທຸກດ້ານຂອງຊີວິດສັງຄົມ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 202)

ອ່ານຕໍ່ສະບັບໜ້າ

## ຜົນສຳເລັດກອງປະຊຸມຄົ້ງປະຖົມມະລຶກຂອງສພຂບໍລິຄຳໄຊ



(ສພຂ) - ພາຍຫຼັງດຳເນີນມາເປັນເວລາ 2 ວັນ, ກອງປະຊຸມຄົ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ V ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມໃນວັນທີ 3 ເມສາຜ່ານມາ ໂດຍ

ອ່ານຕໍ່ໜ້າ 12

## ປິດກອງປະຊຸມຄົ້ງປະຖົມມະລຶກຂອງສພຂເຊກອງ




(ສພຂ) - ກອງປະຊຸມຄົ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ຊຸດທີ V ໄດ້ດຳເນີນໃນວັນທີ 8-9 ເມສານີ້ ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ, ໂດຍການເປັນປະທານຂອງທທ່ານ ບຸນຫຼາຍ ບຸດທີ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີປະທານຄະນະກຳມະການປົກຄອງແຂວງ,ບັນດາການນຳຂອງແຂວງ, ອະດີດການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໂດຍໄດ້ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ດັ່ງນີ້:

ອ່ານຕໍ່ໜ້າ 6




## ສຳເລັດກອງປະຊຸມຄົ້ງປະຖົມມະລຶກຂອງ ສປນວ




(ສພຂ) - ພາຍຫຼັງດຳເນີນມາເປັນເວລາ 2 ວັນ, ກອງປະຊຸມຄົ້ງປະຖົມມະລຶກຂອງສະພາປະຊາຊົນນະຄອນຫຼວງ (ສປນວ) ຊຸດທີ V ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມໃນວັນທີ 3 ເມສາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ອາສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເລຂາຄະນະພັກ ນວ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ເຂົ້າຮ່ວມມີທ່ານ ສິລິລາດທົງສິນທອງເພັງ ຮອງເລຂາຄະນະພັກ,

ອ່ານຕໍ່ໜ້າ 7

## ກອງປະຊຸມຄົບຄະນະບໍລິຫານງານພັກແຂວງໄຊຍະບູລີ

(ສພຂ) - ກອງປະຊຸມຄົບຄະນະບໍລິຫານງານພັກແຂວງໄຊຍະບູລີ ຄັ້ງທີ 3 ສະໄໝທີ VIII ໄດ້ຈັດຂຶ້ນໃນວັນທີ 30 ມີນາຜ່ານມາ, ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງໄຊຍະບູລີ ພາຍໃຕ້ການເປັນປະທານຂອງສະຫາຍ ເພັງນິລັນ ຄຳພັນເພັງ ກຳມະການສູນກາງພັກ ເລຂາຄະນະບໍລິຫານງານພັກແຂວງ ປະທານສະພາປະຊາຊົນແຂວງ,

ອ່ານຕໍ່ໜ້າ 7





ອ່ານໃຫ້ເຂົ້າໃຈ... (ໜ້າ 7)



ການປັບປຸງກົດໝາຍ... (ໜ້າ 9)

ເຝົ້າເບິ່ງ ໄດ້ຍິນ ❖ ວິເສດ ສະແຫວງສຶກສາ

ຕ້ານການສໍ້ລາດບັງຫຼວງ... (ໜ້າ 12)


**ຊົມເຊີຍວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ (5ເມສາ 1961 - 5 ເມສາ 2026) ຢ່າງສຸດໃຈ!**

# ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຜົ້ງສາລີ




(ສພຂ) - ພາຍຫຼັງດຳເນີນມາເປັນເວລາ 2 ວັນ, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ຊຸດທີ V, ໃນວັນທີ 7 ເມສາ ໄດ້ປິດລົງຢ່າງຈົບງາມ ໂດຍພາຍໃຕ້ການເປັນປະທານຂອງທ່ານ ພິຕ. ສິມພອນ ມິດຕະພອນກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີບັນດາການນຳພັກ-ລັດຂັ້ນແຂວງ, ຂັ້ນເມືອງ, ອາດີດການນຳພັກ-ລັດຂັ້ນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 2, ອາດີດສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2, ສະມາຊິກສະພາປະຊາຊົນແຂວງ ຊຸດທີ V, ອາດີດສະມາຊິກສະພາປະຊາຊົນແຂວງ ຊຸດທີ IV, ກຳມະການຄະນະກຳມະການປົກຄອງແຂວງ ແລະ ບັນດາແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.; ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງແຂວງດັ່ງນີ້:

1. ຮັບຟັງລາຍງານຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ V;

2. ເລືອກຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດລັດຂັ້ນທ້ອງຖິ່ນ ແລະ ຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ດັ່ງນີ້:

- ທ່ານ ພິຕ ສິມພອນ ມິດຕະພອນເປັນປະທານສະພາປະຊາຊົນແຂວງ;

-ຮອງປະທານສະພາປະຊາຊົນແຂວງ ຈຳນວນ 2 ທ່ານ: ທ່ານ ສົມຈິດ ທັບລະກອນ ແລະ ທ່ານ ອ່ອນຄຳ ອິນແສງ;

- ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 4 ທ່ານ:

+ ທ່ານ ທອງຄຳ ວິໄລຈິດ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

+ ທ່ານ ນາງ ຈັນມະນີ ດວງພາສູກ ເປັນປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ;

+ ທ່ານ ຄຳພັນ ຄຸນສົມບັດ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ;

+ ທ່ານ ພອນໄຊ ແກ້ວສົມພັນ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ.

-ຮອງປະທານຄະນະກຳມະການແລະຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ:

+ ຮອງປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ ຈຳນວນ 2 ທ່ານ: ທ່ານ ຄຳຮຽງ ພົມມະສິດ ແລະ ທ່ານ ນາງ ບົວວອນ ຈັນທະລັງ;

+ ຮອງປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ຈຳນວນ 2 ທ່ານ: ທ່ານ ສຸວັນຟູ ລາວລີ ແລະ ທ່ານ ສຸຫວັນ ແສງຈັນສຸກ;

+ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ຈຳນວນ 2 ທ່ານ: ຄຳພອນ ໄຊຍະມານ ແລະ ທ່ານ ແສງສະຫວ່າງ ຈິດທະວົງ;

+ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຈຳນວນ 2 ທ່ານ: ທ່ານ ຄຳມາ ສຸລິວົງ ແລະ ທ່ານ ນາງ ຈັນສະຫວັນ ແກ້ວກອງຕັນ;

ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງທ່ານ ອີກ ເພັງສະໝຸດ ເປັນປະທານສານປະຊາຊົນແຂວງ ແລະ ທ່ານ ຄຳໄຊ ສູນວິເລີດ ເປັນຫົວໜ້າອົງການໄອຍະການປະຊາຊົນແຂວງ;

3. ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X ຂອງແຂວງ; ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບແຫ່ງລັດ ປະຈຳພາກເໜືອ, ສະພາປະຊາຊົນແຂວງ ຊຸດທີ V ແລະ ແຜນການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V.

4. ກອງປະຊຸມ ໄດ້ພິຈາລະນາຮັບຮອງ ແລະ ອອກເປັນມະຕິກອງປະຊຸມ ສະພາປະຊາຊົນແຂວງ ທັງໝົດ 12 ສະບັບ ດັ່ງນີ້:

1) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານສະພາປະຊາຊົນແຂວງຊຸດທີV;

2) ມະຕິວ່າດ້ວຍການຮັບຮອງເອົາການເລືອກຕັ້ງຮອງປະທານສະພາປະຊາຊົນແຂວງ ແລະກຳມະການຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ V;

3) ມະຕິວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກຂອງສະພາປະຊາຊົນແຂວງ ຊຸດທີ V, ການແຕ່ງຕັ້ງປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ V;

4) ມະຕິວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງປະທານສານປະຊາຊົນແຂວງ;

5). ມະຕິວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າອົງການໄອຍະການປະຊາຊົນແຂວງ;

6). ມະຕິວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030) ຂອງແຂວງ;

7). ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)ຂອງສານປະຊາຊົນແຂວງ;

8). ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ;

9). ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ;

10). ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)ຂອງອົງການກວດສອບແຫ່ງລັດ ປະຈຳພາກເໜືອ;

11). ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ ແຕ່ປີ 2026-2030 ຂອງສະພາປະຊາຊົນແຂວງ ຊຸດທີ V;

12). ມະຕິວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V.

ນອກຈາກນີ້ຍັງໄດ້ຮັບຟັງການຊີ້ແຈງບາງບັນຫາ ຕາມຄຳຊັກຖາມ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ.



# ສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ຫຼວງນ້ຳທາ



(ສພຂ) - ພາຍຫຼັງດຳເນີນມາເປັນເວລາ 1 ວັນເຄິ່ງ, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ຊຸດທີ V, ໃນວັນທີ 3 ເມສາ ໄດ້ປິດລົງຢ່າງຈົບງາມ ໂດຍພາຍໃຕ້ການເປັນປະທານຂອງທ່ານ ພົທ. ຄຳກິ່ງ ຜຸຍຫຼ້າມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫຼວງນ້ຳທາພ້ອມດ້ວຍບັນດາທ່ານຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີບັນດາການ ນຳພັກ-ລັດຂັ້ນແຂວງ, ຂັ້ນເມືອງ, ອາດີດການນຳພັກ-ລັດຂັ້ນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 2, ອາດີດສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2, ສະມາຊິກສະພາປະຊາຊົນແຂວງ ຊຸດທີ V, ອາດີດສະມາຊິກສະພາປະຊາຊົນແຂວງ ຊຸດທີ IV, ກຳມະການຄະນະກຳມະການປົກຄອງແຂວງ ແລະ ບັນດາແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.; ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງແຂວງດັ່ງນີ້:

1. ຮັບຟັງລາຍງານຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ V;

2. ເລືອກຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດລັດຂັ້ນທ້ອງຖິ່ນ ແລະ ຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ດັ່ງນີ້:

- ທ່ານ ພົທ ຄຳກິ່ງ ຜຸຍຫຼ້າມະນີວົງ ເປັນປະທານສະພາປະຊາຊົນແຂວງ;

-ຮອງປະທານສະພາປະຊາຊົນແຂວງ ຈຳນວນ 2 ທ່ານ: ທ່ານ ກົງ ເພັດ ແກ້ວບົວພາ ແລະ ທ່ານ ບຸນປີ ໄລປະເສີດ;

- ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 4 ທ່ານ:

+ ທ່ານ ວຽງວໄຊ ສັກລຳດວນ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

+ ທ່ານ ຈັນທະສຸລິນ ໝັ້ນປະດິດ ເປັນປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ;

+ ທ່ານ ນາງ ປານິດາ ເຮືອງແພງອ່ອນ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ;

+ ທ່ານ ເພັດສະຫວັນ ຈິດດາລາ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ.

3. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ 2026-2030 ຂອງສະພາປະຊາຊົນແຂວງ ຊຸດທີ V ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ການເຄື່ອນໄຫວວຽກງານ 5 ປີຕໍ່ໜ້າ ໂດຍໄດ້ກຳນົດ 5 ແຜນງານ ແລະ 25 ໂຄງການ ເພື່ອຮັບປະກັນ ແລະ ຍົກສູງຄຸນນະພາບການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ມີປະສິດທິພາບ ແລະ ປະສິດທິຜົນ;

4. ໄດ້ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030)ເຊິ່ງລວມມີທັງໝົດ16 ສະບັບ, ສ້າງໃໝ່ 8 ສະບັບ ແລະ ປັບປຸງ 8 ສະບັບ. ເພື່ອຮັບປະກັນເຮັດໃຫ້ການຜັນຂະຫຍາຍບັນດາກົດໝາຍຂອງແຕ່ລະຂົງເຂດ ເປັນນິຕິກຳໃຕ້ກົດໝາຍຂອງແຂວງ ປະກອບສ່ວນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບົບກົດໝາຍ ເປັນຮູບປະທຳຂຶ້ນເທື່ອລະກ້າວ.

ກອງປະຊຸມ ຍັງໄດ້ຮັບຟັງການຊີ້ແຈງອະທິບາຍ ຈາກບັນດາພະແນກການ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ຕໍ່ຂໍ້ຂ້ອງໃຈຂອງສະມາຊິກສະພາປະຊາຊົນແຂວງ ເຊິ່ງສ່ອງແສງໃຫ້ເຫັນເຖິງຄວາມຮັບຜິດຊອບຂອງອົງການປົກຄອງແຂວງ, ອົງການທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ ທີ່ປະຊາຊົນມອບໝາຍໃຫ້.



# ຄປຈສພຂ ຫຼວງນ້ຳທາ ປະຊຸມປະຈຳເດືອນມີນາ



(ສພຂ) - ວັນທີ 30 ມີນາ, ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາ ປະຈຳເດືອນ ມີນາ 2026 ຂຶ້ນ ໂດຍການເປັນປະທານຂອງທ່ານຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ມີບັນດາທ່ານຄະນະປະຈຳສະພາປະຊາຊົນຫຼວງນ້ຳທາເຂົ້າຮ່ວມ ຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການປະຈຳການໃນໄລຍະປະທານສະພາປະຊາຊົນແຂວງເຂົ້າຮ່ວມກອງປະຊຸມຢູ່ສູນກາງ, ຮັບຟັງການລາຍງານກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V, ຮັບຟັງການລາຍງານການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 13/ຄປຈຂ, ລົງວັນທີ4 ມີນາ 2026, ພ້ອມນັ້ນຍັງໄດ້ປຶກສາຫາລືກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V ເປັນຕົ້ນແມ່ນດ້ານເນື້ອໃນ, ບໍລິຫານພິທີການ ແລະ ອື່ນໆ, ແລະ ໄດ້ພິຈາລະນາໜັງສືສະເໜີຂອງສານປະຊາຊົນແຂວງຈຳນວນໜຶ່ງ. ພ້ອມທັງປຶກສາຫາລືວຽກງານອື່ນໆອີກຈຳນວນໜຶ່ງ.

# ການເຄື່ອນໄຫວວຽກງານຕ່າງໆ ຂອງ ສພຂ ອຸດົມໄຊ



(ສພຂ) - ວັນທີ 17 ມີນາ ຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໄດ້ຈັດກອງປະຊຸມປຶກສາຫາລືລະຫວ່າງ ສະພາປະຊາຊົນແຂວງ ແລະ ຄະນະກຳມະການປົກຄອງແຂວງ, ໂດຍການເປັນປະທານຮ່ວມຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ພີໄລທອງ ຈິດມະນີ ຮອງປະທານຄະນະກຳມະການປົກຄອງແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ຫ້ອງວາການແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການ ຜ່ານຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຊຸດທີV. ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ການກະກຽມບັນດາເນື້ອໃນຕ່າງໆ ທີ່ຈະເຂົ້າຜ່ານໃນກອງປະຊຸມຄັ້ງນີ້ ຄົບຖ້ວນສົມບູນ ແລະ ມອບໃຫ້ພະແນກການ, ອົງການ ທີ່ກ່ຽວຂ້ອງສິ່ງບັນດາເນື້ອໃນຕ່າງໆທີ່ຈະນຳເຂົ້າຜ່ານໃນກອງປະຊຸມໃຫ້ຄະນະຮັບຜິດຊອບລວບລວມ, ພ້ອມທັງ ສືບຕໍ່ ປະສານສົມທົບກັນໃຫ້ກົມກຽວ ລະຫວ່າງ ສະພາປະຊາຊົນແຂວງ ກັບ ຄະນະກຳມະການປົກຄອງແຂວງ ແລະ ຂໍທິດຊີ້ນຳຈາກຂັ້ນເທິງທັດຕົນ ເມື່ອເຫັນວ່າມີບາງບັນຫາທີ່ພົບຄວາມຫຍຸ້ງຍາກ ເພື່ອຮັບປະກັນດ້ານເນື້ອໃນໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຕົວຈິງຂອງສັງຄົມ ກໍ່ຄືທ້ອງຖິ່ນຕົນ ແລະ ໃຫ້ທັນກັບເວລາ.

ພ້ອມນັ້ນ, ຄະນະປະທານກອງປະຊຸມຍັງໄດ້ມີຄຳເຫັນຊີ້ນຳ, ສະຫຼຸບສັງລວມ ແລະ ໄດ້ເນັ້ນໜັກໃຫ້ແຕ່ລະພາກສ່ວນເອົາໃຈໃສ່ຕໍ່ໜ້າວຽກທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນເປັນຕົ້ນແມ່ນ: ກະກຽມບັນດາບົດລາຍງານຂອງຄະນະກຳມະການປົກຄອງແຂວງ, ຂອງສະພາປະຊາຊົນແຂວງ ແລະ ບັນຫາພົ້ນເດັ່ນອື່ນໆ ທີ່ຈະນຳເຂົ້າຜ່ານໃນກອງປະຊຸມດັ່ງກ່າວ ເພື່ອຮັບປະກັນໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຂອງບັນດາທ່ານສະມາຊິກສພາປະຊາຊົນແຂວງ ຖືກຕ້ອງສອດຄອງຕາມແນວທາງນະໂຍບາຍຂອງພັກ-ລັດ ແລະ ພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ຮັບປະກັນໃນການນຳໄປຈັດຕັ້ງປະຕິບັດໃຫ້ສຳເລັດຜົນຕາມລະດັບຄາດໝາຍທີ່ວາງໄວ້.

ໃນວັນທີ 19 ມີນາ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ສະຫຼຸບການເຄື່ອນໄຫວວຽກງານສອງເດືອນ, ເດືອນກຸມພາ ແລະ ເດືອນມີນາ 2026 ຂອງກຳມະບານ ຮາກຖານສະພາປະຊາຊົນແຂວງ, ເປັນປະທານຂອງສະຫາຍ ວົງສີ ບຸນທີໃຈ ຮອງປະທານກຳມະບານໜ່ວຍຮາກຖານສະພາປະຊາຊົນແຂວງ, ໂດຍມີສະຫາຍ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີຄະນະໜ່ວຍ ແລະ ສະມາຊິກກຳມະບານພາຍໃນໜ່ວຍ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ວົງສີ ບຸນທີໃຈ ຮອງປະທານກຳມະບານຮາກຖານສະພາປະຊາຊົນແຂວງ, ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານສອງເດືອນ,ເດືອນກຸມພາ-ເດືອນມີນາ ແລະ ຜ່ານທິດທາງແຜນການເດືອນເມສາ 2026 ເຊິ່ງຕະຫຼອດ 2 ເດືອນທີ່ຜ່ານມາສະມາຊິກກຳມະບານໄດ້ເອົາໃຈໃສ່ໃນການປະຕິບັດໜ້າທີ່ວຽກງານຕາມການມອບໝາຍສຳເລັດຕາມແຜນການ ແລະ ລະດັບຄາດໝາຍທີ່ວາງໄວ້ອັນພົ້ນເດັ່ນແມ່ນ: ສຳເລັດໃນການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V.

ຫຼັງຈາກນັ້ນ, ບັນດາສະຫາຍສະມາຊິກກຳມະບານໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບດັ່ງກ່າວ ຢ່າງກົງ ໄປກົງມາເພື່ອໃຫ້ເນື້ອໃນຄົບຖ້ວນສົມບູນ, ພ້ອມທັງຕຳນິສິ່ງຂ່າວເຊິ່ງກັນແລະກັນພາຍໃນໜ່ວຍຢ່າງຈິງອົກຈິງໃຈ ຕື່ມອີກ.

ເພື່ອເປັນດການກຽມພ້ອມຮອບດ້ານໃນວັນທີ 19 ມີນາ ຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ມີກອງປະຊຸມແຕ່ງຕັ້ງຄະນະຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີV; ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ,ປະທານສະພາປະຊາຊົນແຂວງອຸດົມໄຊ, ມີຮອງປະທານສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມ, ທ່ານ ສົມພອນ ນາວຣີວ່າງ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ໄດ້ຕາງໜ້າຄະນະຮັບຜິດຊອບ ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງສະບັບເລກທີ 224/ຄປຈ, ລົງວັນທີ 18 ມີນາ 2026 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກ ໃນການກະກຽມກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ແລະ ຜ່ານມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 185/ຄປຈ, ລົງວັນທີ 11 ມີນາ 2026 ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ ຂອງສະພາປະຊາຊົນແຂວງ.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ແລະ ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ການແບ່ງຄວາມຮັບຜິດຊອບຂອງບັນດາທ່ານໃນແຕ່ລະອະນຸກຳມະການ ໃຫ້ຖືກຕາມພາລະບົດບາດ, ສິດ ແລະ ໜ້າທີ່, ພ້ອມທັງປະສານສົມທົບກັບພະແນກການ, ອົງການທີ່ກ່ຽວຂ້ອງໃຫ້ກົມກຽວ ເພື່ອຮັບປະກັນທາງດ້ານເນື້ອໃນໃຫ້ຄົບຖ້ວນສົມບູນ, ຮັດກຸມ, ສິ່ງໃຫ້ຄະນະຮັບຜິດຊອບທັນກັບເວລາ ແລະ ເພື່ອຮັບປະກັນໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຂອງບັນດາທ່ານສະມາຊິກສພາປະຊາຊົນແຂວງ ໃນກອງປະຊຸມ ຖືກຕ້ອງຕາມກົດໝາຍ,ລະບຽບການທີ່ກຳນົດໄວ້.

ແລະ ວັນອັງຄານທີ 24 ມີນາ ຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ໄດ້ເຜີຍແຜ່ເອກະສານ 2 ວັນປະຫວັດສາດສຳຄັນຂອງຊາດ-ຂອງພັກ, ໂດຍການເປັນປະທານຂອງສະຫາຍ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະໜ່ວຍພັກ, ຄະນະຫ້ອງວ່າການສະພາປະຊາຊົນແຂວງ ແລະ ສະມາຊິກພັກພາຍໃນໜ່ວຍ ເຂົ້າຮ່ວມ.

ເອກະສານທີ່ນຳມາເຜີຍແຜ່ໃນຄັ້ງນີ້ປະກອບມີ: ເອກະສານໂຄສະນາ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 71 ປີ(22 ມີນາ 1955-22 ມີນາ 2026) ເຊິ່ງໄດ້ຍົກໃຫ້ເຫັນເຖິງປະຫວັດສາດແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງພັກປະຊາຊົນປະຕິວັດລາວຕະຫຼອດໄລຍະ 71 ປີຜ່ານມາ, ພັກເຮົາໄດ້ສືບທອດພາລະກິດມາຈາກພັກກອມມູນິດອິນດູຈີນ, ພາຍໃຕ້ການນຳພາຂອງປະທານ ໄກສອນ ພົມວິຫານ. ພັກໄດ້ວາງແນວທາງການເມືອງອັນສະຫຼາດສ່ອງໃສ, ເຕົ້າໂຮມຄວາມສາມັກຄີທົ່ວປວງຊົນລາວບັນດາເຜົ່າ ດຳເນີນການຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານຢ່າງພິລະອາດຫານ ຈົນສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ແລະ ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ 1975.

ສຳລັບແຂວງອຸດົມໄຊ, ພາຍໃຕ້ການນຳພາຂອງອົງຄະນະພັກແຂວງ, ເສດຖະກິດ-ສັງຄົມ ກໍໄດ້ມີການຂະຫຍາຍຕົວ, ພື້ນຖານໂຄງລ່າງ, ການສຶກສາ ແລະ ສາທາລະນະສຸກ ໄດ້ຮັບການປັບປຸງດີຂຶ້ນໃນທົ່ວແຂວງ. ຫຼັງຈາກນັ້ນ, ໄດ້ເລົ່າຄືນມູນເຊື້ອວັນນັກຮົບເສຍອົງຄະແລະເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 80 ປີ (21 ມີນາ 1946-21 ມີນາ 2026), ໂດຍໄດ້ເນັ້ນໜັກເຖິງເຫດການບັ້ນຮົບປ້ອງກັນຕົວເມືອງທ່າແຂກທີ່ນຳພາໂດຍປະທານສຸພານຸວົງ, ເຊິ່ງເປັນບັ້ນຮົບທີ່ດຸເດືອດ ແລະ ພິລະອາດຫານທີ່ສຸດ. ເຖິງວ່າພວກເຮົາຈະຖືກສັດຕູຢຶດຄອງ ແລະ ສ້າງໂສກນາດຕະກຳອັນໂຫດຮ້າຍປ່າເຖື່ອນເຮັດໃຫ້ທະຫານ ແລະ ປະຊາຊົນເສຍຊີວິດຫຼາຍກວ່າ 3,000 ຄົນ, ແຕ່ຈິດໃຈວັນທີ21 ມີນາ ໄດ້ກາຍເປັນ "ວັນຄຽດແຄ້ນ" ແລະ ເປັນແຮງຊຸກດັນໃຫ້ຄົນລາວຮຸ່ນຕໍ່ໆມາມີຄວາມຮັກຊາດ, ເສຍສະຫຼະຊີວິດ ແລະ ເລືອດເນື້ອ ເພື່ອຕໍ່ສູ້ຍາດເອກະລາດຂອງຊາດຢ່າງບໍ່ຢຸດຢັ້ງ.

ປະຕິບັດຕາມວາລະ, ຄະນະໜ່ວຍພັກ ຍັງໄດ້ຜ່ານຮ່າງບົດສຳສະຫຼຸບການນຳພາ-ຊີ້ນຳຂອງໜ່ວຍພັກຮາກຖານສະພາປະຊາຊົນແຂວງ ປະຈຳເດືອນກຸມພາ, ມີນາ ແລະ ວາງທິດທາງແຜນການປະຈຳເດືອນ ເມສາ 2026. ພ້ອມນັ້ນ, ບັນດາສະຫາຍສະມາຊິກພັກ ໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ, ເພື່ອໃຫ້ເນື້ອໃນຄົບຖ້ວນສົມບູນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ, ພ້ອມທັງໄດ້ຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ພາຍໃນໜ່ວຍຕື່ມອີກ.



# ຖອດຖອນບົດຮຽນບັ້ນເລືອກຕັ້ງຢູ່ຫົວພັນ




(ສພຂ) - ວັນທີ 12 ມີນານີ້, ແຂວງຫົວພັນ ໄດ້ຈັດກອງປະຊຸມສະຫລຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V. ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ. ໂດຍການເປັນປະທານຂອງທ່ານ ນາງ ສວຍເຜີດ ທອງສົມບັດ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ຜູ້ປະຈຳການ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ຄະນະປະຈຳການ, ຫົວໜ້າອະນຸກຳມະການເລຂານຸການ ມີບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າ, ຮອງຫົວໜ້າອະນຸກຳມະການ, ກອງເລຂາຊ່ວຍວຽກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມທ່ານ ນາງ ສວຍເຜີດ ທອງສົມບັດ ໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດແຜນການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ເຊິ່ງໄດ້ຍົກໃຫ້ເຫັນສະພາບລວມ, ຕີລາຄາຜົນການຈັດຕັ້ງປະຕິບັດວຽກງານ ບາດກ້າວທີ 1 ຮອດບາດກ້າວທີ 3 ເປັນຕົ້ນແມ່ນວຽກງານເລຂານຸການ, ວຽກງານໂຄງປະກອບ ແລະ ບຸກຄະລາກອນ, ວຽກງານໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກບໍລິຫານ, ພິທີການ ແລະ ງົບປະມານ. ພ້ອມນີ້ ຍັງຍົກໃຫ້ເຫັນສະພາບລວມໃນການດຳເນີນການປ່ອນບັດເລືອກຕັ້ງ, ຜົນໄດ້ຮັບໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V ແລະ ແຜນການຈັດຕັ້ງປະຕິບັດ ໃນບາດກ້າວທີ4. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສຸມໃສ່ປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການກະກຽມ ແລະ ດຳເນີນການເລືອກຕັ້ງ ທີ່ເຫັນໄດ້ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ .

ວັນທີ່ 27 ມີນາ ຜ່ານມາ, ແຂວງຫົວພັນຈັດພິທີ ປະກາດກົງຈັກການຈັດຕັ້ງ 6 ຕາແສງ ຂອງເມືອງຊຳໃຕ້ ຢູ່ທີ່ສະໂມສອນຂອງເມືອງ ເປັນກຽດເຂົ້າຮ່ວມມີທ່ານ ຄອນປະພັນ ເລືອງສີຈັນທອງ ຮອງເລຂາພັກແຂວງ ຜູ້ປະຈຳການ ປະທານສະພາປະຊາຊົນແຂວງ, ທ່ານ ທອງ ຄູນທອນຮຸ່ງມີໄຊ ກຳມະການພັກແຂວງ ເລຂາພັກເມືອງຊຳໃຕ້, ມີປະທານ, ຮອງປະທານປົກຄອງເມືອງ, ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງອ້ອມຂ້າງ, ອົງການທຽບເທົ່າ, ຄະນະພັກອຳນາດການປົກຄອງບ້ານອ້ອມຂ້າງເມືອງ, ພະນັກງານລັດຖະກອນ ຕະຫຼອດຮອດ ປະຊາຊົນບ້ານອ້ອມຂ້າງເທດສະບານເມືອງຊຳໃຕ້ເຂົ້າຮ່ວມນຳ.

ເມືອງຊຳໃຕ້ປະກອບມີ 6 ຕາແສງ ທີ່ຂຶ້ນກັບອົງຄະນະພັກເມືອງຊຳໃຕ້ຄື: ຕາແສງຊຳໃຕ້, ຕາແສງ ວຽງພັນ, ຕາແສງພັນຊຳ, ຕາແສງປາວ, ຕາແສງໜອງຄຳ, ຕາແສງຫົວຊຽງ, ໃນນີ້ ຕາແສງຊຳໃຕ້ ມີບ້ານ 3 ກຸ່ມບ້ານ , ມີ 25 ບ້ານຂຶ້ນກັບຄື: ບ້ານພັນສະຫວັນ, ບ້ານເມືອງພັດ, ບ້ານຊຳໃຕ້, ບ້ານຊຳທອງ, ບ້ານຖິ່ນ, ບ້ານຄົ້, ບ້ານເລົາ, ບ້ານສົບສ້ານ, ບ້ານຫ້ວຍກິກ, ບ້ານພຽງໂຮມ, ບ້ານຊຽງດີ, ບ້ານນາຫຼ້າ, ບ້ານນາເຫຼົ້າ, ບ້ານໂພນໄຊ, ບ້ານປອມຄົ້, ບ້ານຫ້ວຍລາດ, ບ້ານນ້ຳອື້ນ, ບ້ານກໍ່ລູ້, ບ້ານພູແລ, ບ້ານນາສີຄຳໄຊ, ບ້ານນາແຊວ, ບ້ານຜາເຜີ້ງ, ບ້ານນາຮຽງ, ບ້ານຖ້ຳຈິກ, ບ້ານຜາລ້ອມ, ແລະບ້ານຜານົກແຊວ, ມີພົນລະເມືອງ 15 ພັນ217 ຄົນ, ຍິງ 7 ພັນ 517 ຄົນ, ຕາແສງ ວຽງພັນ ມີ 1 ກຸ່ມບ້ານ, ມີ ມີ 8 ບ້ານຂຶ້ນກັບຄື: ບ້ານເຕົ໊າ, ບ້ານພຽງຄູນ, ບ້ານນາເກືອ, ບ້ານນາໄຊ, ບ້ານປັກປຸກ, ບ້ານປ່າຂົມ, ບ້ານນ້ຳໄຕ ແລະ ບ້ານນ້ຳບົ່ງ, ມີ 849 ຫຼັງຄາເຮືອນ, ມີພົນລະເມືອງທັງໝົດ 5 ພັນ 344 ຄົນ, ຍິງ 2 ພັນ 6 ຮ້ອຍກວ່າຄົນ, ຕາແສງພັນຊຳ ມີ 22 ບ້ານຂຶ້ນກັບ,ຄື: ບ້ານພຽງຖິ່ນ, ບ້ານພຽງດ້າຍ, ບ້ານສົບແກ້ມ, ບ້ານຕີນຜາ, ບ້ານຜາຫາດ, ບ້ານເມືອງຂັນ, ບ້ານພຽງໃໝ່, ບ້ານນາມາດ, ບ້ານສົບເປົ໊ງ, ບ້ານນາງິ້ວ, ບ້ານນາອີນ, ບ້ານວີ, ບ້ານສົມກາງ, ບ້ານດ່ານ, ບ້ານຕີນພູ, ບ້ານຄາ, ບ້ານປຸ່ງບານ, ບ້ານຫ້ວຍມູນ,ບ້ານຫົວຄັງດ ບ້ານຫ້ວຍໄຄ້, ບ້ານຫີນຕັ້ງ, ແລະ ບ້ານອີດ, ມີ 1 ພັນ 446 ຫຼັງຄາເຮືອນ, ມີພົນລະເມືອງທັງໝົດ 8 ພັນ 651 ຄົນ, ຍິງ 4 ພັນ 231 ຄົນ, ຕາແສງປາວ ມີ 3 ກຸ່ມບ້ານຂຶ້ນກັບ, ມີ 538 ຫຼັງຄາເຮືອນ, ມີ 13 ບ້ານຄື: ບ້ານພຽງເຜືອ, ບ້ານປາວໃຕ້, ບ້ານເຜືອເໜືອ, ລ້ານດ່ານນາຄຳ, ບ້ານເມືອງກຽນ, ບ້ານນາແລ, ບ້ານປາວເໜືອ, ບ້ານຜາໜອງບອນ, ບ້ານນາຕອກ, ບ້ານທາງ, ບ້ານໂພໄຊ, ບ້ານທ່າເຫຼົ້າ, ແລະ ບ້ານເມືອງເກີນ, ມີພົນລະເມືອງທັງໝົດ 2 ພັນ 964 ຄົນ, ຍິງ, 1 ພັນ 534 ຄົນ,ຕາແສງໜອງຄຳ ມີ 12 ບ້ານຂຶ້ນກັບຄື: ບ້ານຫ້ວຍນີ້, ບ້ານຫ້ວຍສາລາ, ບ້ານນ້ຳແຕບ, ບ້ານຫົວນາ, ບ້ານນາເມືອງ, ບ້ານຈະອ່າຍ, ບ້ານຫ້ວຍປູນ, ບ້ານຫ້ວຍສະແດບ, ບ້ານຖ້ຳໝູ, ບ້ນຍອດເຢືອງ ແລະ ບ້ານແກ້ງໄໝ່, ມີ 656 ຫຼັງຄາເຮືອນ, ມີພົນລະເມືອງທັງໝົດ 4 ພັນ 864 ຄົນ, ຍິງ 2 ພັນ 2 ຮ້ອຍກວ່າຄົນ,ຕາແສງຫົວຊຽງ ມີ 10 ບ້ານຂຶ້ນກັບ ຄື: ບ້ານຫົວຊຽງ, ບ້ານປຸກ, ບ້ານນາໂພ, ບ້ານໜອງແຮດ, ບ້ານໜອງໄຊ, ບ້ານຫ້ວຍຮັບ, ບ້ານສົບຕຽງ, ບ້ານແກ່ວດົ້ງ, ບ້ານທັບຄົ້, ແລະ ບ້ານປ່າເລົາ, ມີ 494 ຫຼັງຄາເຮືອນ, ມີພົນລະເມືອງທັງໝົດ 3 ພັນ 367 ຄົນ, ຍິງ 1 ພັນ 579 ຄົນ, ເຊິ່ງແຕ່ລະຕາແສງປະກອບມີ 5 ໜ່ວຍງານຄື: ໜ່ວຍງານບໍລິຫານ-ການປົກຄອງ, ໜ່ວຍງານພັກ-ອົງການຈັດຕັ້ງມະຫາຊົນ, ໜ່ວຍງານເສດຖະກິດ-ການເງິນ, ໜ່ວຍງານວັດທະນະທຳ-ສັງຄົມ, ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສ້າງຕັ້ງຕາແສງໃນຄັ້ງນີ້ແມ່ນການສ້າງຕັ້ງກົງຈັກໃໝ່ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການປົກຄອງຂັ້ນທ້ອງຖິ່ນ, ຂັ້ນຮາກຖານ ໃຫ້ມີຄວາມເຂັ້ມແຂງ ໃນການຄຸ້ມຄອງບໍລິຫານ ແລະ ເຮັດໃຫ້ການປະສານງານ ດີກ່ວາເກົ່າທັງຮັບປະກັນໃຫ້ ມີສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ,ໃນການປົກປັກຮັກສາ ແລະ ສ້າງສາພັດທະນາເສດຖະກິດຂອງເມືອງ, ກໍ່ຄືການພັດທະນາເສດຖະກິດຂອງແຂວງ, ແກ້ໄຂຄວາມທຸກຍາກ, ຂອງປະຊາຊົນພາຍໃນເມືອງໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ, ການປະກາດ 6 ຕາແສງຂອງເມືອງຊຳໃຕ້ໃນຄັ້ງນີ້ ໄດ້ແຕ່ງຕັ້ງປະທານ, ຮອງປະທານພ້ອມດ້ວຍຫົວໜ້າໜ່ວຍງານປະຈຳແຕ່ລະຕາແສງດັ່ງນີ້:ແຕ່ງຕັ້ງທ່ານ ສອນທະສັກ ມາລາວັນ ກຳມະການພັກເມືອງ ຮອງຫົວໜ້າຫ້ອງການການເງິນເມືອງ ເປັນຄະນະກຳມະການປົກຄອງຕາແສງ ຊຳໃຕ້, ທ່ານ ນາງທອງສຸໄລພອນ ຮອງຫົວໜ້າ ຍທຂ ເມືອງ, ທ່ານ ພັດ ທັ້ງສອນຄຳ ສີບຸນເຮືອງ ຫົວໜ້າປກສ ກຸ່ມບ້ານ ເປັນຮອງປະທານຕາແສງຊຳໃຕ້, ແຕ່ງຕັ້ງທ່ານ ທອງເຜີດ ອິນສີປັນຍາ ຮອງຫົວໜ້າຄະນະຈັດຕັ້ງເມືອງ ເປັນປະທານຄະນະກຳມະການປົກຄອງຕາແສງວຽງພັນ, ທ່ານ ນາງ ວັນແກ້ວ ດາວວົງຄຳ ຮອງປະທານສະຫະພັນແມ່ຍິງເມືອງ, ທ່ານ ຄຳມີ ສີພະຄຸນ ຫົວໜ້າໜ່ວຍງານບໍລິຫານຫ້ອງການຈັກຕັ້ງເມືອງ ເປັນຮອງປະທານຄະນະກຳມະການປົກຄອງຕາແສງ ວຽງພັນ, ບົ່ງຕົວແຕ່ງຕັ້ງທ່ານ ຄຳສຸກ ພົມມະວົງ ກຳມະການພັກເມືອງ ຫົວໜ້າຫ້ອງການການເງິນເມືອງ ເປັນປະທານຄະນະກຳມະການປົກຄອງຕາແສງ ປາວ, ທ່ານຄຳອື້ນ ສີຫາພັດ ຮອງເລຂາຊາວໜຸ່ມເມືອງ ແລະ ທ່ານ ເປບຊີ ແສງສຸຫຼ້າວັນ ຫົວໜ້າໜ່ວຍງານບໍລິຫານຫ້ອງວ່າການເມືອງ ເປັນຮອງປະທານປົກຄອງຕາແສງປາວ, ແຕ່ງຕັ້ງທ່ານ ພາລັກແສງ ຈັນທະວິໄຊ ຮອງຫົວໜ້າຫ້ອງວ່າການເມືອງ ເປັນປະທານຄະນະກຳມະການປົກຄອງຕາແສງພັນຊຳ, ທ່ານ ສອນທະສີ ສີບຸນມີຮອງຫົວໜ້າຫ້ອງການວັດທະນະທຳ-ທ່ອງທ່ຽວເມືອງ, ທ່ານ ແສງວິດາ ທຳບຸນກອງ ຫົວໜ້າໜ່ວຍງານບໍລິຫານຫ້ອງການໂຄສະນາອົບຮົມເມືອງເປັນຮອງປານທານຕາແສງ ພັນຊຳ, ແຕ່ງຕັ້ງທ່ານ ພັທ ທອນພັນ ພົມມະສິດ ກຳມະການພັກເມືອງ ຫົວໜ້າກອງບັນຊາການທະຫານເມືອງເປັນປະທານຄະນະກຳມະການປົກຄອງຕາແສງ ໜອງຄຳ, ທ່ານ ບຸນໄຊ ປູາຍົ້ງຖໍ, ທ່ານ ທະດາສັກ ພອນຄຳໄຊ ຮອງປະທານກຳມະບານເມືອງເປັນຮອງປະທານປົກຄອງຕາແສງ ໜອງຄຳ, ແຕ່ງຕັ້ງທ່ານ ທອງຄົນ ຄຳມະລົມ ຮອງຫົວໜ້າຫ້ອງການສຶກສາເມືອງ ເປັນປະທານຄະນະກຳມະການປົກຄອງຕາແສງຫົວຊຽງ, ທ່ານ ພັທ. ລຽນພອນ ວັນທະວົງສາ ຫົວໜ້າຫ້ອງການການເມືອງ ປກສເມືອງ, ທ່ານ ທອງພອນ ທະວິສຸກ ຫົວໜ້າໜ່ວຍງານຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ເປັນຮອງປະທານປົກຄອງຕາແສງຫົວຊຽງ, ນອກຈາກນີ້ຍັງໄດ້ ບົ່ງຕົວແຕ່ງຕັ້ງຫົວໜ້າ, ຮອງຫົວໜ້າໜ່ວຍງານແລະພະນັກງານຊ່ວຍວຽກຕາແສງລະ 13 ທ່ານຕື່ມອີກ.

**(ວັນແສງ)**

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງສາລະວັນ




(ສພຂ) - ວັນທີ 25 ມີນານີ້ ທີ່ຫ້ອງປະຊຸມສະໂມສອນແຂວງ, ໄດ້ມີກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ (ສພຂ) ກັບ ອົງການປົກຄອງແຂວງສາລະວັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງແລະທ່ານປອ. ໂພສີ ແກ້ວສີພັນດອນ ຄະນະປະຈຳພັກແຂວງ ຮອງປະທານຄະນະກຳມະການປົກຄອງແຂວງ; ເຂົ້າຮ່ວມມີບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ບັນດາທ່ານຄະນະປະຈຳ ສພຂ, ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ອ້ອມຂ້າງແຂວງ, ຫ້ອງວ່າການສະພາປະຊາຊົນແຂວງ, ບັນດາທ່ານຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ພະນັກງານ-ລັດຖະກອນພາຍໃນຫ້ອງວ່າການສະພາປະຊາຊົນແຂວງ ເຂົ້າຮ່ວມ;

ກອງປະຊຸມໄດ້ຮັບຟັງການລາຍງານຜົນການພົວພັນປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ ໄລຍະ 6 ເດືອນຜ່ານມາ ທີ່ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ ເຊິ່ງສະແດງເຖິງຄວາມພະຍາຍາມ ແລະ ເອົາໃຈໃສ່ສູງໃນການພົວພັນປະສານງານຮ່ວມກັນ ຈົນມີຜົນສຳເລັດໃນແຕ່ລະດ້ານ ລວມທັງດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ເຮັດໃຫ້ການປະຕິບັດ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ; ຈາກນັ້ນ, ກອງປະຊຸມໄດ້ຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະ ກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄື 16 ຫົວຂໍ້ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສພຂ ຊຸດທີ V ທີ່ຈະຈັດຂຶ້ນໃນເມສາທີ່ຈະມາເຖິງນີ້;

ພ້ອມນັ້ນ, ກອງປະຊຸມຍັງໄດ້ພ້ອມກັນຕີລາແລະຖອດຖອນບົດຮຽນກົນໄກການປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເພື່ອປັບປຸງ ແລະ ຍົກສູງປະສິດທິຜົນໃນການພົວພັນ ແລະ ປະສານງານປະຕິບັດພາລະບົດບາດ ລະຫວ່າງ ສພຂ ກັບ ບັນດາອົງການລັດຂັ້ນແຂວງໃຫ້ດີຂຶ້ນເທື່ອລະກ້າວ; ຮັບປະກັນ ໃຫ້ການປະຕິບັດພາລະບົດບາດ ຂອງ ວພຂ ແລະ ອົງການອຳນາດລັດຂັ້ນຕ່າງໆຂອງແຂວງໃຫ້ສອດຄ່ອງກັບລະບຽບກົດໝາຍ, ການເຄື່ອນໄຫວຂອງແຕ່ລະອົງການໃຫ້ມີປະສິດທິຜົນ ແລະ ປະສິດທິພາບສູງຂຶ້ນ.

# ກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ວຽງຈັນ



(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ V ໄດ້ດຳເນີນຂຶ້ນໃນວັນທີ 7-8 ເມສາຜ່ານມາ ທີ່ສະໂມສອນໃຫຍ່ຂອງແຂວງໂດຍການເປັນປະທານຂອງທ່ານ ພູທະນູເຜັດ ໄຊສີມບັດ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ; ມີການນຳຂັ້ນແຂວງ, ອະດີດການນຳແຂວງ, ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ວຽງຈັນ; ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ກົມກອງ ພາຍໃນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນພື້ນຖານຂອງແຂວງ ເປັນຕົ້ນ:

1. ຮັບຟັງຜົນການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະ ຂອງ ສສຂ;

2. ຮັບຮອງເອົາທ່ານ ພູທະນູເຜັດ ໄຊສີມບັດ ປະທານສະພາປະຊາຊົນແຂວງ ຊຸດທີ V.

3. ຮັບຮອງເອົາຮອງປະທານສະພາປະຊາຊົນແຂວງ ແລະ ຄະນະປະຈຳສະພາປະຊາຊົນ ຊຸດທີ V ຄື:

- ທ່ານ ສີທົນ ແສງພະຈັນ ເປັນຮອງປະທານສະພາປະຊາຊົນແຂວງ;
- ທ່ານ ຄຳພັນ ຊະນະໄພ ເປັນຮອງປະທານສະພາປະຊາຊົນແຂວງ;
- ທ່ານ ນາງ ວົງເດືອນ ວັດຕະໂສ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ພົນໂທ ບຸນນຳ ຈັນທອງສີ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ;

4. ຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຄື:

- ທ່ານ ສີທົນ ແສງພະຈັນ ເປັນປະທານຄະນະກຳມະການເສດຖະກິດ, ການເງິນແລະສິ່ງແວດລ້ອມ;
- ທ່ານ ສີສະໄຫວ ແກ້ວດາລາວົງ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
- ທ່ານ ພົນໂທ ບຸນນຳ ຈັນທອງສີ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ;
- ທ່ານ ນາງ ວົງເດືອນ ວັດຕະໂສ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງວຽງຈັນ.

5. ຮັບຮອງເອົາທ່ານ ລຳໄມ ກູດລາວົງ ເປັນປະທານອົງການກວດກາລັດແຂວງແລະຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ.

6. ຮັບຮອງເອົາທ່ານ ບຸນຄໍ້າ ທຳມະວົງ ຫົວໜ້າອົງການໄອຍະການປະຊາຊົນແຂວງວຽງຈັນ

7. ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ (2026-2030) ຂອງແຂວງວຽງຈັນ.

8. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງ ສພຂ ຊຸດທີ V.

9. ຮັບຮອງເອົາແຜນການເຄື່ອນໄຫວວຽກງານປະຈຳ 5 ປີ (2026-2030) ຂອງອົງການກວດສອບປະຈຳພາກກາງ;

10. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດ;

11. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ;

12. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ.

**(ບຸລາຕີ ແສນທະວົງ)**



# ສພຂ ສາລະວັນ ສຳເລັດ ກອງປະຊຸມຄັ້ງປະຖົມມະລຶກ



(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ V ໄດ້ອັດລົງດ້ວຍຜົນສຳເລັດ ໃນວັນທີ 8 ເມສາ 2026 ພາຍຫຼັງດຳເນີນມາເປັນເວລາ2 ວັນໂດຍການເປັນປະທານຂອງທ່ານ ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີທ່ານ ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14; ມີປະທານຄະນະກຳມະການປົກຄອງແຂວງ, ບັນດາການນຳຂອງແຂວງ, ອະດີດການນຳ, ສສຊ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V; ປະທານຄະນະກຳມະການອົງການປົກຄອງບັນດາເມືອງ, ຫົວໜ້າພະແນກການ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາ ມະຕິກອງປະຊຸມ 10 ສະບັບ ຄື:

1. ຮັບຮອງເອົາທ່ານ ດາວວົງ ພອນແກ້ວ ປະທານສະພາປະຊາຊົນແຂວງ ຊຸດທີ V;

2. ຮັບຮອງເອົາ ຮອງປະທານສະພາປະຊາຊົນແຂວງ ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຄື:

- ທ່ານ ຈັນສະໝອນ ພົມມະແສງ ເປັນຮອງປະທານສະພາປະຊາຊົນແຂວງ;
- ທ່ານ ນາງ ວາດສະໜາ ໂພໄຊຍະວົງ ເປັນຮອງປະທານສະພາປະຊາຊົນແຂວງ.

3. ຮັບຮອງເອົາປະທານຄະນະກຳມະການ, ຫົວໜ້າຫ້ອງວ່າການ, ໂຄງປະກອບກົງຈັກຂອງສະພາປະຊາຊົນແຂວງ ຄື:

- ທ່ານ ບຸນເຕື້ຍ ດວງສຸລິຍະວົງສາ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ;
- ທ່ານ ສົມພອນ ແສງສຸລິ ເປັນປະທານຄະນະກຳມະການເສດຖະກິດ, ການເງິນແລະສິ່ງແວດລ້ອມ;
- ທ່ານ ນາງ ຄຳພໍ ສີລິພະຈັນ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
- ທ່ານ ບຸນທະວີ ພົມມະສານ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ.

4. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ ຂອງແຂວງ;

5. ແຜນການເຄື່ອນໄຫວວຽກງານ 5 ປີ ຂອງສະພາປະຊາຊົນແຂວງ ຊຸດທີ V;

6. ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)ຂອງອົງການກວດສອບປະຈຳພາກໃຕ້;

7. ແຜນການເຄື່ອນໄຫວວຽກງານ 5 ປີ ຂອງອົງການກວດກາລັດແຂວງ;

8. ແຜນການເຄື່ອນໄຫວວຽກງານ 5 ປີ ຂອງສານປະຊາຊົນແຂວງ;

9. ແຜນການເຄື່ອນໄຫວວຽກງານ 5 ປີ ຂອງອົງການໄອຍະການປະຊາຊົນແຂວງ;

10. ແຜນການສ້າງແລະປັບປຸງນິຕິກຳທີ່ມີຜົນ ບັງຄັບທົ່ວໄປ 5 ປີ ຂອງແຂວງ (2026-2030) ລວມມີ 16 ສະບັບ ໃນນັ້ນ, ສ້າງໃໝ່ 10 ສະບັບ ແລະ ປັບປຸງ 6 ສະບັບ.

**(ວິໄລວອນ ສິດທິໄຊ)**



# ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ໄຊສົມບູນ



(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ V ໄດ້ດຳເນີນ ໃນວັນທີ 7-9 ເມສານີ້, ທີ່ຫ້ອງປະຊຸມສະໂມສອນໃຫຍ່ເມືອງອະນຸວົງ ແຂວງໄຊສົມບູນ ພາຍໃຕ້ການເປັນປະທານຂອງທ່ານ ພອຍຄຳ ຮຸ່ງບຸນຍວງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V ໂດຍການ; ເຂົ້າຮ່ວມມີທ່ານ ພົຈວ. ບົວພັນ ອິນທະປັນຍາ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ທີ 18 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V; ມີພະນັກງານອາວຸໂສບຳນານ, ຕາງໜ້າອົງການຈັດຕັ້ງພັກ-ລັດ, ນາຍບ້ານ-ບ້ານເທດສະບານ, ວິສາຫະກິດທັງພາກລັດ ແລະ ເອກະຊົນເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງໄຊສົມບູນດັ່ງນີ້:

1. ຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະ ຂອງ ສສຂ ໄຊສົມບູນ ຊຸດທີ V ເຊິ່ງເລືອກຕັ້ງໄດ້ ສສຊ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ຈຳນວນ 7 ທ່ານ, ຍິງ 2 ທ່ານ, ເລືອກຕັ້ງໄດ້ ສສຂ ໄຊສົມບູນ ຊຸດທີ V ຈຳນວນ 25 ທ່ານ ແລະ ຍິງ 6 ທ່ານ.

2. ຮັບຮອງໂຄງປະກອບບຸກຄະລາກອນທີ່ສຳຄັນຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V ຄື:

1) ຮັບຮອງເອົາການເລືອກຕັ້ງ ທ່ານ ພອຍຄຳ ຮຸ່ງບຸນຍວງ ເປັນປະທານສະພາປະຊາຊົນແຂວງໄຊສົມບູນ;

2) ຮັບຮອງເອົາການເລືອກຕັ້ງທ່ານ ນາງ ຄຳສີ ສິດທິວໍລະດາ ເປັນຮອງປະທານສະພາປະຊາຊົນແຂວງໄຊສົມບູນ;

3) ຮັບຮອງເອົາການເລືອກຕັ້ງທ່ານ ຄົວຈົ້ງ ດຣາເຊັ່ງ ເປັນຮອງປະທານສະພາປະຊາຊົນແຂວງໄຊສົມບູນ.

3. ຮັບຮອງເອົາກຳມະການຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V ຈຳນວນ 7 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1) ທ່ານ ພອຍຄຳ ຮຸ່ງບຸນຍວງ ເປັນປະທານຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ;

2) ທ່ານ ນາງ ຄຳສີ ສິດທິວໍລະດາ ເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

3) ທ່ານ ຄົວຈົ້ງ ດຣາເຊັ່ງ ເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

4) ທ່ານ ບຸນກອງ ຊິ່ງປາຢັ້ງເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

5) ທ່ານ ສົມດີ ຈັນທະວົງເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

6) ທ່ານ ບີ ເຮີ່ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

7) ທ່ານ ຟອງສະໄໝ ຊໍ່ແສງທອງ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V.

4. ກອງປະຊຸມໄດ້ພິຈາລະນາ, ຮັບຮອງ ແລະ ອອກເປັນມະຕິກອງປະຊຸມຂອງສະພາປະຊາຊົນແຂວງ ທັງໝົດຈຳນວນ 9 ສະບັບດັ່ງນີ້:

1) ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາປະທານສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

2) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາຮອງປະທານສະພາປະຊາຊົນແຂວງ ແລະ ກຳມະການຄະນະປະຈຳການ ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V;

3) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດແຂວງໄຊສົມບູນ;

4) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ;

5) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນ ແຂວງໄຊສົມບູນ;

6) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ຂອງສານປະຊາຊົນ ແຂວງໄຊສົມບູນ;

7) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ຂອງອົງການກວດກາລັດແຂວງໄຊສົມບູນ;

8) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດ ໝາຍ 5 ປີ (2026-2030) ຂອງຄະນະກຳມະການປົກຄອງແຂວງໄຊສົມບູນ;

9) ມະຕິ ກອງປະຊຸມວ່າດ້ວຍການຮັບຮອງເອົາແຜນການ 5 ປີ (2026-2030) ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງແຂວງໄຊສົມບູນ.




## ປິດກອງປະຊຸມ...

(ຕໍ່ຈາກໜ້າ 1)

1. ຜົນການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະ ຂອງ ສສຂ ເຊກອງ ຊຸດທີ V;

2. ຮັບຮອງເອົາທ່ານ ບຸນຫລາຍ ບຸດທີ ເປັນປະທານສະພາປະຊາຊົນແຂວງຊຸດທີV;

3. ຮັບຮອງເອົາການເລືອກຕັ້ງ ຮອງປະທານສະພາປະຊາຊົນແຂວງ ແລະ ກຳມະການຄະນະປະຈຳ ສະພາປະຊາຊົນແຂວງ ຊຸດທີ V ຄື:

- ທ່ານ ປອ ຕຸລາວັນ ວົງໄຊ ເປັນຮອງປະທານສະພາປະຊາຊົນແຂວງ;
- ທ່ານສຸພົນ ໄຊສະຫງ່າ ເປັນຮອງປະທານສະພາປະຊາຊົນແຂວງ;
- ທ່ານ ແສງລາຕີ ຫຼອມຍະເດດ ເປັນກຳມະການຄະນະປະຈຳ ສະພາປະຊາຊົນແຂວງ
- ທ່ານ ນາງ ຄຳໄພ ວິລະສານ ເປັນກຳມະການຄະນະປະຈຳ ສະພາປະຊາຊົນແຂວງ
- ທ່ານ ນາງ ໄຮມະນີ ວົງໝັ່ນແກ້ວ ເປັນກຳມະການຄະນະປະຈຳ ສະພາປະຊາຊົນແຂວງ
- ທ່ານ ອຳໄພວັນ ຊະນິພົນ ເປັນກຳມະການຄະນະປະຈຳ ສະພາປະຊາຊົນແຂວງ

4. ຮັບຮອງເອົາໂຄງປະກອບກົງຈັກ ຂອງສະພາປະຊາຊົນແຂວງ, ແຕ່ງຕັ້ງປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ V ຄື:

- ທ່ານ ແສງລາຕີ ຫຼອມຍະເດດ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;
- ທ່ານ ນາງ ຄຳໄພ ວິລະສານ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
- ທ່ານ ນາງ ໄຮມະນີ ວົງໝັ່ນແກ້ວ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ;
- ທ່ານ ອຳໄພວັນ ຊະນິພົນ ເປັນປະທານຄະນະກຳມະການເສດຖະກິດ, ການເງິນແລະສິ່ງແວດລ້ອມ.

5. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 5 ປີ ຄັ້ງທີ X (2026-2030);

6. ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ;

7. ແຜນການແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ;

8. (2026-2030) ຂອງອົງການໄອຍະການປະຊາຊົນແຂວງ;

9. ແຜນການເຄື່ອນໄຫວ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V;

10. ແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V.

**(ນາລີວັນ)**

## ສານອວຍພອນ...

(ຕໍ່ຈາກໜ້າ 1)

ເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີດ້ວຍຄວາມເອກອ້າງທະນົງໃຈ, ໄດ້ດຳເນີນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີV ດ້ວຍຜົນສຳເລັດຢ່າງສະຫງ່າງາມ. ປີທີ່ຜ່ານມາ, ເຖິງວ່າພວກເຮົາຈະປະເຊີນກັບສິ່ງທ້າທາຍນານາປະການ, ແຕ່ດ້ວຍຄວາມສາມັກຄີເປັນປຶກແຜ່ນພາຍໃນຊາດ, ການສະໜັບສະໜູນຊ່ວຍເຫຼືອຈາກປະເທດເພື່ອນມິດແລະອົງການຈັດຕັ້ງສາກົນ, ພວກເຮົາສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍໄປໄດ້ໂດຍດີ ແລະ ຍາດໄດ້ຜົນສຳເລັດທີ່ເປັນຮູບປະທຳຫຼາຍດ້ານ, ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຟື້ນຕົວ ແລະ ຂະຫຍາຍຕົວ ດ້ວຍທ່ວງທ່າດີຂຶ້ນ, ອິດທິພົນບົດບາດຂອງ ສປປລາວ ໃນເວທີພາກພື້ນ ແລະ ສາກົນ ໄດ້ຮັບການເຊີດຊູສູງເດັ່ນຂຶ້ນຕື່ມ ແລະ ສືບຕໍ່ນຳພາປະເທດຊາດກ້າວເຂົ້າສູ່ສັງກາດໃໝ່ແຫ່ງການພັດທະນາໃນຊຸມປີຕໍ່ໜ້າ.

ພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,

ປີມະເມຍ ພ.ສ 2569 ທີ່ຈະມາເຖິງນີ້ ທົ່ວໂລກຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກສັບສົນ ທີ່ເກີດຈາກຜົນກະທົບຂອງຄວາມຂັດແຍ້ງ ແລະ ການປະທະກັນຢູ່ບາງພາກພື້ນ; ດັ່ງນັ້ນ, ຈຶ່ງຂໍຮຽກຮ້ອງມາຍັງພໍ່ແມ່ປະຊາຊົນກໍຄືທຸກພາກສ່ວນໃນສັງຄົມ ຈົ່ງສືບຕໍ່ເຊີດຊູນ້ຳໃຈຮັກຊາດ ແລະ ຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ອ້ອມຂ້າງສູນກາງພັກ ແລະ ລັດຖະບານ, ພ້ອມກັນຜ່ານຜ່າຄວາມຫຍຸ້ງຍາກທີ່ຈະເກີດຂຶ້ນ, ອອກແຮງປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີXII ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ໃຫ້ມີຜົນສຳເລັດເປັນຮູບປະທຳ, ເຊີດຊູຄວາມເປັນເຈົ້າປະເທດຊາດ, ປະກອບສ່ວນເຂົ້າໃນພາລະກິດພັດທະນາປະເທດຊາດຢ່າງແຂງແຮງຕາມທິດສີຂຽວ ແລະ ຍືນຍົງ ໃຫ້ມີຜົນສຳເລັດ.

ພີ່ນ້ອງຮ່ວມຊາດ, ເພື່ອນມິດສະຫາຍທີ່ຮັກແພງທັງຫຼາຍ,

ໃນວາລະອັນເປັນສິລິມຸງຄຸນນີ້, ຂ້າພະເຈົ້າຂໍສົ່ງຄຳອວຍພອນໄຊອັນປະເສີດ ໃຫ້ພີ່ນ້ອງຮ່ວມຊາດໃນທົ່ວປະເທດ ຕະຫຼອດເຖິງພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ກໍຄືຊາວຕ່າງປະເທດທີ່ດຳລົງຊີວິດ ແລະ ປະຕິບັດໜ້າທີ່ຢູ່ ສປປລາວ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຢູ່ເຢັນເປັນສຸກ, ມີຜົນສຳເລັດໃນໜ້າທີ່ວຽກງານແລະຂໍໃຫ້ການສະຫຼອງປີໃໝ່ລາວໃນປີນີ້ ເຕັມໄປດ້ວຍຄວາມເບີກບານມ່ວນຊື່ນແລະມີຄວາມສະຫງົບປອດໄພທຸກປະການດ້ວຍເທີ້ນ. (ສະບາຍດີປີໃໝ່).




# ອ່ານໃຫ້ເຂົ້າໃຈ ປະຕິບັດໃຫ້ບັນລຸຕາມຄາດໝາຍ

**# ທິດດີ**

ມື້ກ່ອນໄດ້ສະເໜີບົດ: "ກຳແໜ້ນວິທີການຈັດຕັ້ງປະຕິບັດ..." ສຳລັບມື້ນີ້ ຂໍສະເໜີຕໍ່ບົດນີ້ເພື່ອຈັດຕັ້ງປະຕິບັດນັ້ນຄື: ບົດແນະນຳກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເລກທີ 38/ຄອສພ, ລົງວັນທີ 03 ກຸມພາ 2026 ທີ່ສົ່ງເຖິງຄະນະພັກບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ; ໃນຄຳແນະນຳມີສີ່ຂໍ້ໃຫຍ່ຄື:

I. ຈຸດປະສົງລະດັບຄາດໝາຍ.

II. ບັນດາເນື້ອໃນຕົ້ນຕໍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ.

III. ວິທີການຈັດຕັ້ງເຊື່ອມຊຶມຢູ່ບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

IV. ມາດຕະການຈັດຕັ້ງປະຕິບັດ.

ຜູ້ຂຽນຂໍອະນຸຍາດສະເໜີຄຳເຫັນສ່ວນຕົວວ່າ ໝາກຫົວໃຈຂອງຄຳແນະນຳມີຄື:

III. ວິທີການຈັດຕັ້ງເຊື່ອມຊຶມຢູ່ບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

ໃນການເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ຢູ່ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕ້ອງເອົາໃຈໃສ່ບາງບັນຫາດັ່ງນີ້:

1). ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕ້ອງຮັບປະກັນໃຫ້ທຸກເປົ້າໝາຍ ໄດ້ເຂົ້າຮ່ວມຢ່າງທົ່ວເຖິງ ທັງຮັບປະກັນການອະທິບາຍເນື້ອໃນຢ່າງຮັດກຸມ, ມີຈຸດສຸມ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ພາຍໃຕ້ການນຳພາໂດຍກົງຂອງສະຫາຍກຳມະການສູນກາງພັກ ແລະ ເລຂາຄະນະພັກຢູ່ແຕ່ລະຂັ້ນ.

2). ໃຫ້ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈັດຕັ້ງການເຊື່ອມຊຶມເອກະສານໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໃນທົ່ວອົງຄະນະພັກຂອງຕົນ ນັບແຕ່ມື້ອອກຄຳສັ່ງເປັນຕົ້ນໄປ ແລະ ໃຫ້ສຳເລັດ ພາຍໃນທ້າຍເດືອນມີນາ 2026.

- ສຳລັບກະຊວງ, ອົງການ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງຕົນ ຖ້າກະຊວງ, ອົງການໃດ ມີຈຳນວນພົນຫຼາຍ ກໍອາດຈະເຮັດເປັນ 2-3 ຊຸດ, ມອບໃຫ້ສະຫາຍເລຂາຄະນະພັກເປັນຜູ້ຮັບຜິດຊອບ; ຈາກນັ້ນ, ມອບໃຫ້ແຕ່ລະຮາກຖານ ສືບຕໍ່ນຳໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສ່ວນຢູ່ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເລຂາພັກເມືອງ, ນະຄອນ, ຄະນະປະຈຳພັກເມືອງ, ນະຄອນ ຂອງຕົນ ໂດຍແມ່ນສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ; ຈາກນັ້ນ, ມອບໃຫ້ສະຫາຍເລຂາຄະນະພັກເມືອງ, ນະຄອນ ນຳໄປຈັດຕັ້ງເຊື່ອມຊຶມຢູ່ຂັ້ນເມືອງ, ນະຄອນ ໂດຍເຕົ້າໂຮມພະນັກງານຫຼັກແຫຼ່ງຂັ້ນເມືອງ, ເລຂາຄະນະພັກຮາກຖານແລະເລຂາໜ່ວຍພັກຮາກຖານ ເຂົ້າຮ່ວມ ແລະ ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສຳລັບການເຜີຍແຜ່, ເຊື່ອມຊຶມ ໃຫ້ແກ່ປະຊາຊົນຢູ່ຂັ້ນບ້ານ ແມ່ນມອບໃຫ້ສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ, ຄະນະພັກຮາກຖານຕາແສງ ຊີ້ນຳການຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບຈຸດພິເສດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະບ່ອນ (ມີເອກະສານສະເພາະຕ່າງຫາກ ເປັນຄຳຖາມ-ຄຳຕອບ)

3). ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ແບ່ງກັນລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ (ລະອຽດຈະມີແຜນ ແລະ ແຈ້ງໃຫ້ຊາບຕາມພາຍຫຼັງ).

4). ໃຫ້ຄະນະພັກແຕ່ລະຂັ້ນນຳໃຊ້ສື່ມວນຊົນປະເພດຕ່າງໆ ເພື່ອເຜີຍແຜ່ບັນດາເນື້ອໃນຕົ້ນຕໍຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ, ພ້ອມກັນນັ້ນກໍເຜີຍແຜ່ຜົນສຳເລັດຂອງການຈັດຕັ້ງຜັນຂະຫຍາຍໃນແຕ່ລະໄລຍະຕິດພັນກັບນຳສະເໜີຜົນງານ, ຕົວແບບ ກໍຄືບຸກຄົນດີເດັ່ນ ທີ່ເກີດຂຶ້ນໃນຂະບວນການຕົວຈິງໃນແຕ່ລະຂົງເຂດວຽກງານຢ່າງຕໍ່ເນື່ອງເພື່ອປຸກລະດົມຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ຟົດຟື້ນ, ແຂງແຮງ ແລະ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງອອກ.

IV. ມາດຕະການຈັດຕັ້ງປະຕິບັດ.

1. ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕ້ອງນຳພາຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນເນື້ອໃນຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ແລະ ຄຳແນະນຳສະບັບນີ້ ໃຫ້ເລິກເຊິ່ງ ແລະ ຫັນເປັນແຜນງານ, ໂຄງການ, ຄາດໝາຍສູ້ຊົນຂອງຄະນະພັກພ້ອມທັງນຳພາຈັດຕັ້ງປະຕິບັດໃຫ້ບັນລຸໝາກຜົນຕົວຈິງ.

2. ຄະນະພັກແຕ່ລະຂັ້ນຕ້ອງເປັນເຈົ້າການໃນການຄົ້ນຄວ້າກະກຽມເນື້ອໃນເອກະສານລະອຽດຊ່ວຍຄະນະພັກ, ເລຂາຄະນະພັກຂອງຕົນ ໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ; ທັງເປັນເຈົ້າການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ, ມີການສະຫຼຸບຕີລາຄາເປັນປົກກະຕິແລະປະຕິບັດລະບອບລາຍງານຕໍ່ຄະນະພັກຂັ້ນເທິງ ຢ່າງເປັນລະບົບ.

3. ຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະກວດກາສູນກາງພັກ ແລະ ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການແນະນຳ, ຊຸກຍູ້, ຕິດຕາມການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕາມພາລະບົດບາດຂອງຕົນ ເພື່ອເກັບກຳສັງລວມລາຍງານຕໍ່ກົມການເມືອງ, ຄະນະເລຂາສູນກາງພັກຮັບຊາບ ແລະ ໃຫ້ທິດຊີ້ນຳເປັນປົກກະຕິ.

4. ໃຫ້ຄະນະພັກບັນດາກະຊວງ, ອົງການ, ຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການສະຫຼຸບລາຍງານຜົນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍໃນແຕ່ລະໄລຍະ ໃຫ້ຄະນະໂຄສະນາອົບຮົມສູນກາງພັກ ແລະ ຫ້ອງວ່າການສູນກາງພັກ ຊາບ ເພື່ອສະຫຼຸບສັງລວມລາຍງານຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຊາບ ແລະ ໃຫ້ທິດຊີ້ນຳ ໃນຂັ້ນຕໍ່ໄປ.

ຂ້າງເທິງນັ້ນ, ແມ່ນໝາກຫົວໃຈຂອງຄຳແນະນຳທີ່ຢາກໃຫ້ອ່ານໃຫ້ເຂົ້າໃຈ, ປະຕິບັດໃຫ້ບັນລຸຕາມຄາດໝາຍ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ມີຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານ-ຮອງປະທານຄະນະກຳມະການປົກຄອງແຂວງ, ບັນດາກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ເລຂາ-ຮອງເລຂຄະນະບໍລິຫານງານພັກເມືອງ, ປະທານ-ຮອງປະທານຄະນະກຳມະການປົກຄອງເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ, ລັດວິສາຫະກິດ, ຫົວໜ້າດ່ານສາກົນ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ສະຫາຍ ເພັງນິລັນ ຄຳພັນເພັງ ໄດກ່າວເປີດກອງປະຊຸມເຊິ່ງບາງຕອນໄດ້ກ່າວວ່າ: ຕະຫຼອດໄລຍະຜ່ານມາ ເຖິງວ່າສະພາບການຂອງໂລກ ແລະ ພາກພື້ນໄດ້ຜັນແປໄປຢ່າງສັບສົນ ຍາກທີ່ຈະຄາດຄະເນໄດ້, ບັນຫາການປະທະກັນທາງການທະຫານ, ບັນຫາສົງຄາມການຄ້າໂລກຂອງ ບັນດາປະເທດມະຫາອຳນາດ, ບັນຫາຂໍ້ຜິດພາດທາງເຂດແດນຂອງ ປະເທດອ້ອມຂ້າງ, ບັນຫາສະພາບ ເຄັ່ງຮ້ອນການປະທະກັນຂອງບັນດາປະເທດຢູ່ຕາເວັນອອກກາງທີ່ໄດ້ສົ່ງຜົນກະທົບ ໂດຍກົງຕໍ່ຕ່ອງໂສ້ການ ຜະລິດ, ການສະໜອງນ້ຳມັນເຊື້ອໄຟ ລວມໄປເຖິງຕໍ່ເສດຖະກິດພາກພື້ນ, ສາກົນ ແລະ ສປປລາວຂອງ ພວກເຮົາຢ່າງຫຼີກລ່ຽງບໍ່ໄດ້ບັນດາອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີຍັງສືບຕໍ່ປະຕິບັດກົນອຸບາຍຫັນປ່ຽນໂດຍສັນຕິ ແນໃສ່ມ້າງເພທຳລາຍແຂວງພວກເຮົາໃນທຸກດ້ານ, ສະພາບຄວາມຫຍຸ້ງຍາກດ້ານ ເສດຖະກິດ, ບັນຫາໄພພິບັດທຳມະຊາດ ບວກກັບການລະບາດຂອງພະຍາດຕ່າງໆເຊິ່ງໄດ້ສົ່ງຜົນກະທົບຕໍ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດກໍຄືແຂວງໄຊຍະບູລີຂອງພວກເຮົາ. ແຕ່ເຖິງ ຢ່າງໃດກໍ່ຕາມ ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະບໍລິຫານງານພັກແຂວງ, ຄະນະພັກແຕ່ລະຂັ້ນບວກກັບຄວາມເອົາໃຈໃສ່ປະກອບສ່ວນຂອງນັກທຸ ລະກິດຜູ້ປະກອບການ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ ທີ່ໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບຂອງຕົນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນທີ່ໄດ້ກຳນົດໄວ້ ສາມາດບັນລຸຕາມລະດັບຄາດໝາຍວາງໄວ້. ເຮັດໃຫ້ສະພາບເສດຖະກິດຂອງແຂວງໄດ້ມີທ່າອ່ຽງຂະຫຍາຍຕົວດີຂຶ້ນ, ໂຄງປະກອບເສດຖະກິດໄດ້ຫັນໄປ ຕາມທິດທີ່ໄດ້ກຳນົດໄວ້.

ໃນພິທີຜູ້ເຂົ້າຮ່ວມໄດ້ຮັບຟັງລາຍງານການຕີລາຄາການນຳພາ-ຊີ້ນຳວຽກງານຮອບດ້ານ3ເດືອນຕົ້ນປີ2026 ແລະ ທິດທາງແຜນການ 9 ເດືອນໃນຕໍ່ໜ້າ, ການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ 3 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 9ເດືອນໃນຕໍ່ໜ້າ, ຕີລາຄາການເມືອງ-ແນວຄິດຕິດພັນກັບການຜັນຂະຫຍາຍຜົນສຳເລັດກອງປະຊຸມໃຫ່ຍຄັ້ງທີ XII ຂອງພັກ, ການຈັດເກັບລາຍຮັບ, ການຄຸ້ມຄອງລາຍຈ່າຍ 3 ເດືອນຕົ້ນປີ 2026 ແລະທິດທາງແຜນການ 9ເດືອນໃນຕໍ່ໜ້າ, ການສົ່ງເສີມການປູກພືດລະດູແລ້ງ, ແຜນການກະກຽມການສະກັດ ກັ້ນໄຟໄໝ້ລາມປ່າ, ການບຸກລຸກປ່າ, ການຄຸ້ມຄອງແລະອອກໃບຕາດິນພາຍໃນແຂວງ, ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກແລະວຽກງານສາມສ້າງ, ການສົ່ງເສີມການສົ່ງອອກສິນຄ້າ ແລະ ຄຸ້ມຄອງການນຳເຂົ້າສິນຄ້າ; ສະກັດກັ້ນ ການລັກລອບຂຸດຄົ້ນແຮ່ທາດຕ່າງໆທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຢູ່ພາຍ ໃນແຂວງ, ການສົ່ງເສີມການສົ່ງອອກສິນຄ້າ ແລະ ຄຸ້ມຄອງການນຳເຂົ້າສິນຄ້າ, ການປັບປຸງ, ສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ ແລະ ມາດຕະການ ການຄຸ້ມຄອງນ້ຳໜັກລົດບັນທຸກປະເພດຕ່າງໆ, ການຊຸກຍູ້ການຮຽນ-ການສອນຂອງຄູອາຈານ, ການກະກຽມສອບເສັງ ພາກຮຽນທີ II ແລະ ການປະຕິບັດນະໂຍບາຍຕໍ່ນ້ອງ ນັກຮຽນ ທີ່ນອນໃນຫໍພັກ, ການເຝົ້າລະວັງການລະບາດຂອງພະຍາດຕາມລະດູການ, ການຊຸກຍູ້ວຽກງານທ່ອງທ່ຽວພາຍ ໃນແຂວງ, ການຄຸ້ມຄອງແຮງງານລາວ ຢູ່ພາຍໃນ ແລະ ຕ່າງປະເທດ ແລະ ການຕິດຕາມຊຸກຍູ້ຟື້ນຟູຜົນກະທົບຈາກໄພພິບັດໃນໄລຍະຜ່ານມາ, ການເຜີຍແຜ່ກົດໝາຍ ແລະ ການປະເມີນນິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນແຂວງຮັບຮອງ.

**(ຂັນແກ້ວ)**



## ສຳເລັດ...

(ຕໍ່ຈາກໜ້າ 1)

ປະທານຄະນະກຳມະການປົກຄອງນະຄອນຫຼວງ, ບັນດາທ່ານການນຳນະຄອນຫຼວງ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນວ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ ແລະ ແຂກຖືກເຊີນເຂົ້າຮ່ວມ; ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ດັ່ງນີ້:

1) ຮັບຮອງເອົາຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະ ຂອງສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V;




2) ໄດ້ດຳເນີນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງອົງການອຳນາດລັດຂັ້ນນະຄອນຫຼວງວຽງຈັນຄື: ເລືອກຕັ້ງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ຮອງປະທານສະພາປະຊາຊົນ, ຄະນະປະຈຳສະພາປະຊາຊົນ, ເລືອກຕັ້ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງວຽງຈັນ, ຮອງປະທານຄະນະກຳມະການປົກຄອງ, ຫົວໜ້າອົງການໄອຍະການປະຊາຊົນ ພາກກາງ, ປະທານອົງການກວດກາລັດ ນະຄອນຫຼວງ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ; ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງສະພາປະຊາຊົນ; ຮັບຮອງເອົາໂຄງປະກອບກົງຈັກ ຂອງຄະນະກຳມະການປົກຄອງນະຄອນຫຼວງ ແລະ ບຸກຄະລາກອນທີ່ເປັນຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນນະຄອນຫຼວງວຽງຈັນ ຊຸດໃໝ່.



3) ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ (2026-2030) ຂອງນະຄອນຫຼວງວຽງຈັນ.

4) ພິຈາລະນາ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດ ນະຄອນຫຼວງວຽງຈັນ ແລະ ອົງການກວດກາສອບປະຈຳພາກກາງ 1.

5) ພິຈາລະນາ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນ ນະຄອນຫຼວງ ຊຸດທີ V.

6) ພິຈາລະນາ ແລະ ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳ 5 ປີ (2026-2030) ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V.

7) ພິຈາລະນາ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ພາກກາງ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ.

ໃນໄລຍະກອງປະຊຸມໄດ້ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນຈຳນວນທັງໝົດ 18 ເລື່ອງ ແລະ ໄດ້ມອບໝາຍໃຫ້ພາກສ່ວນຂະແໜງການກ່ຽວຂ້ອງ ຂອງຄະນະກຳມະການປົກຄອງນະຄອນຫຼວງ ໄປຄົ້ນຄວ້າແກ້ໄຂໃຫ້ທັນເວລາ ແລະ ຄ່ອງຕົວ;

ພ້ອມນີ້, ໃນກອງປະຊຸມທຸກພາກສ່ວນ ຂອງນະຄອນຫຼວງວຽງຈັນກໍໄດ້ສະແດງຄວາມເປັນຫ່ວງເປັນໃຍ ແລະ ສືບຕໍ່ຊ່ວຍເຫຼືອຄອບຄົວປະຊາຊົນ ຜູ້ປະສົບໄພພິບັດທີ່ໄດ້ຮັບຜົນກະທົບຈາກພາຍຸລະດູຮ້ອນຢ່າງຮີບດ່ວນ ແລະ ທັນການ, ພ້ອມນີ້ ບັນດາທ່ານ ສະມາຊິກສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາປະຊາຊົນນະຄອນຫຼວງ ກໍໄດ້ສະເໜີຄະນະກຳມະການປົກຄອງ ນະຄອນຫຼວງ ແລະ ເມືອງ ສືບຕໍ່ຊ່ວຍເຫຼືອ ແລະ ຟື້ນຟູທີ່ຢູ່ອາໄສ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ກັບເຂົ້າສູ່ສະພາບປົກກະຕິໂດຍໄວ;




## ຫົດສົງດ້ອຍ ນ້ຳໃສໃຈຈິງ

\# ດອກຊ້ອນ ດອນໂຂງ

❊ ນ້ຳໃຈໃສສະອາດແທ້ ຜຸດຜ່ອງບໍລິສຸດ
ດຸດດັ່ງດວງບຸບຜາ ສະຫງ່າງາມບານແຍ້ມ
ກີບຄູນຄຳແຊມຕົ້ນ ດາວເຮືອງຊ້ອນກິ່ນ
ຈຳປາບານຮຸ່ງຕົ້ນ ຫອມກົ້ວກິ່ນຂະຈອນ

❊ ແລ້ວເລົ່າ ອວນຮຽກເອີ້ນ ພອນທິບສິບປະການ
ຈາກຜູ່ຊົງສັກສິດ ແຫ່ງສະຫວັນເມືອງຟ້າ
ເຂົ້າມາໂອທອງເຫຼື້ອມ ສີໃສຜຸດຜ່ອງ
ຖອກຫົດສົງທົ່ວໜ້າ ພົງເຊື້ອຊາດຕະກູນ

❊ ໃຫ້ຄ່ອຍຢູ່ດີເຢີ ຝູງພວກນ້ອງ ພັນຜູກແພງຮັກ ຂ້ອຍນາ!
ຂໍຈົ່ງເທຍລະຄາຄົງ ຢູ່ສະບາຍເບົາແຄ້ນ
ແມ່ນວ່າໂພຍໄພຮ້າຍ ຈົ່ງໜີໄກໄລຫ່າງ
ໂຊກໄຊໄຫຼຫຼັ່ງເຂົ້າ ມາໂຮມເຕົ້າອັ່ງອໍ

❊ ໃພຜູ່ ສົມມາດແມ້ງ ໂດຍດັ່ງປາຖະໜາ ມາແລ້ວ!
ຈົ່ງຮັບມາເໝືອນເດີມ ຕໍ່ເຕີມຕາມເລື້ອຍ
ໃຜຜູ້ຍັງຄົງດ້ອຍ ຄອຍຫາຖ້າໂອກາດ
ຄາວນີ້ຈົ່ງພົບພໍ້ ໄຊກ້າສະຫງ່າງາມ ທ່ານເອີຍ!



## ຫົກຫາຍ ລະບາຍ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມທ້ຽນ

❊ ສະບາຍດີປີໃໝ່ລາວ **2569** ສະພາລາວໝົດທຸກທ່ານ ຫຼາຍທ່ານຄືຈະໄດ້ໄປຢ້ຽມຢາມບ້ານຖິ່ນເນົາ ຈັ່ງໃດກໍດີ ປີເກົ່າກາຍຜ່ານພົ້ນ ຂໍໃຫ້ທຸກຄົນຈົ່ງໄດ້ ການງານສຸຂະພາບ ແລງເຂັ້ມໃຫຍ່ຍາວ **(ຍາວ ແມ່ນໝາຍເຖິງອາຍຸຍືນຍາວ, ໃຫຍ່ແມ່ນໝາຍເຖິງໜ້າທີ່ຕຳແໜ່ງ ແລະ ແລງ ແມ່ນໝາຍເຖິງສຸຂະພາບ).**

❊ ຊົມເຊີຍ**ກອງປະຊຸມຄັ້ງປະຖົມມະລຶກ** ຂອງສະພາປະຊາຊົນແຂວງທົ່ວປະເທດ ເຊິ່ງ**ບາງເຂດແຂວງກໍໄດ້ສຳເລັດເສັດສິ້ນຢ່າງເປັນທາງການ** ແລະ ບາງເຂດນັ້ນ ກໍກຳລັງຊຸ້ນຊ້ຽວທ້າງທາກະກຽມ ທາກມີເຫດການໃດຕື່ນເຕັ້ນ ຍ່ຍື່ນຂໍ້ມູນທານແບ່ເດີ ພໍ່ວ່າມີວັນຊຽບ ທັກທາຍລະບາຍຍ້ອງ ອອກໜັງສືພິມພໍ່ໃຫ້ ຄົນທາງໄກເພີ່ນໄດ້ອ່ານ ຕິດຕາມຂ່າວອຽກບ້ານ ການເມືອງພ້ອມທົ່ວສະພາ **ນັ້ນແລ້ວ!**

## ຊອບຍິ້ມ

\# ພົ້ງລົງ

### ເລື່ອງ: ວ່າຈັ່ງໃດ

ມີຍິງສາວຄົນໜຶ່ງ ໄດ້ອູ້ມລູກໄວກຳລັງດີຂຶ້ນລົດໄຟ ເພື່ອໄປທ່ອງທ່ຽວໃນຊ່ວງວັນພັກ; ຜ່ານສະຖານີທີໜຶ່ງໄປ ລູກນ້ອຍໄດ້ເລີ່ມຮ້ອງໄຫ້, ເວລາທີ່ລູກໄຫ້ລາວມັກຈະເວົ້າວ່າ: "ຮີບກິນນົມໄວໆ ຖ້າບໍ່ກິນ ແມ່ຊິໃຫ້ພໍ່ລຸງຢູ່ທາງຂ້າງກິນໄດ໋". ລູກໄຫ້ເທື່ອໃດລາວຈະເວົ້າແບບນັ້ນອົບຢູ່ສອງສາມຮອບ, ລຸງທີ່ນັ່ງຢູ່ທາງຂ້າງໃຈຮ້າຍ ຈົນຮ້ອງອອກມາວ່າ: "ຖາມລູກມຶງດີໆດຸ ຊິເອົາຈັ່ງໃດ? ຊິກິນຫຼືບໍ່ກິນ, ກູກາຍບ່ອນລົງມາສອງສະຖານີລະໄດ໋... ຖາມມັນດຸ ມັນຊິເອົາຈັ່ງໃດ!!!"



## ສຸພາສິດ-ຄະຕິເຕືອນໃຈ

\# ດອກຫຍ້າ

ໃຈປະສົງຕໍ່ໄມ້ ຈຶ່ງແບກຂວານມາ
ໃຈປະສົງຕໍ່ປາ ຈຶ່ງແບກແຫມາພ້ອມ
ຊອມຊິເປັນຕາໄດ້ ຊິສານໄຊມາໃສ່
ຄັນບໍ່ເປັນຕາໄດ້ ຊິໄລ້ຮ້າງຫ່າງໜີ

# ການປັບປຸງກົດໝາຍທໍ່ສົ່ງແກັສ ຂອງ BiH ກໍ່ໃຫ້ເກີດຄວາມກັງວົນ ເລື່ອງຄວາມໂປ່ງໃສ

(Xinhua) - ການປັບປຸງກົດໝາຍທີ່ສະເໜີກ່ຽວກັບໂຄງການທໍ່ສົ່ງແກັສ "ການເຊື່ອມຕໍ່ແກັສພາກໃຕ້ ລະຫວ່າງ ບົດສະນີ-ແຮກເຊໂກວິນາ (Bosnia and Herzegovina - BiH) ກັບ ກຣົວຊີ (Croatia)" ໄດ້ກໍ່ໃຫ້ເກີດຄວາມຂັດແຍ້ງໃນ BiH, ໂດຍກຸ່ມເຝົ້າລະວັງ ແລະ ຜູ້ຊ່ຽວຊານດ້ານກົດໝາຍ ເຕືອນເຖິງຄວາມສ່ຽງຕໍ່ຄວາມໂປ່ງໃສ ແລະ ການຕິດຕາມກວດກາຂອງພາກລັດ.

ລັດຖະບານກາງຂອງບົດສະນີ-ແຮກເຊໂກວິນາ ໄດ້ອະນຸມັດ ແລະ ສົ່ງການປັບປຸງກົດໝາຍ ໄປຍັງລັດຖະສະພາເມື່ອວັນທີ 31 ມີນາຜ່ານມາ ພາຍໃຕ້ຂັ້ນຕອນຮີບດ່ວນ, ການປ່ຽນແປງດັ່ງກ່າວ ຈະນໍາສະເໜີນັກລົງທຶນທີ່ເຊື່ອມໂຍງກັບສະຫະລັດ ຄື AAFS Infrastructure and Energy ເຂົ້າມາເປັນທັງຫຸ້ນສ່ວນ ແລະ ຜູ້ຖືໂຄງການ.

ອົງການຄວາມໂປ່ງໃສສາກົນ (Transparency International) ໃນ BiH ກ່າວວ່າ ການກະທໍາດັ່ງກ່າວ ອາດຈະທໍາລາຍການແຂ່ງຂັນໃນຕະຫຼາດ ແລະ ສ້າງແບບຢ່າງທີ່ມີບັນຫາ ໂດຍການລະບຸຊື່ນັກລົງທຶນເອກະຊົນໂດຍກົງໃນກົດໝາຍເຊິ່ງກໍ່ໃຫ້ເກີດຄວາມກັງວົນກ່ຽວກັບການຄອບງໍາທາງກົດໝາຍທີ່ອາດເກີດຂຶ້ນ, ຜູ້ຊ່ຽວຊານດ້ານກົດໝາຍຍັງເຕືອນອີກວ່າ ການຝັງຮູບແບບການລົງທຶນສະເພາະເຂົ້າໃນກົດໝາຍ ອາດຈະແຊກແຊງຂອບການຄຸ້ມຄອງດ້ານພະລັງງານທີ່ມີຢູ່ຂອງປະເທດ.

ໂຄງການນີ້ ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມງານສາກົນ ແລະ ຖືກຖືວ່າເປັນກຸນແຈສໍາຄັນໃນການປັບປຸງຄວາມໝັ້ນຄົງ ແລະ ກະຈາຍແຫຼ່ງພະລັງງານ ໂດຍກ່ຽວຂ້ອງກັບການກໍ່ສ້າງທໍ່ສົ່ງແກັສທໍາມະຊາດແຫຼວ (liquefied natural gas - LNG) ຄວາມຍາວກວ່າ 200 ກິໂລແມັດ ເຊື່ອມຕໍ່ບົດສະນີກັບກຣົວຊີ ແລະ ສະຖານີ LNG ເທິງເກາະເຄີກ (Krk), ຄ່າໃຊ້ຈ່າຍທີ່ຄາດຄະເນໄວ້ແມ່ນຫຼາຍກວ່າ 180 ລ້ານເອີໂຣ (207 ລ້ານໂດລາ); ທາງການກ່າວວ່າ ການປັບປຸງກົດໝາຍມີຈຸດປະສົງເພື່ອຊີ້ແຈງພັນທະຂອງນັກລົງທຶນ ແລະ ເລັ່ງການຈັດຕັ້ງປະຕິບັດ.

ເຖິງຢ່າງໃດກໍຕາມ, ພັກຝ່າຍຄ້ານ ແລະ ນັກວິຈານອື່ນໆ ໂຕ້ຖຽງວ່າ ວິທີການທີ່ສະເໜີນີ້ ແຕກຕ່າງຈາກຮູບແບບການເປັນເຈົ້າຂອງຂອງລັດໃນພື້ນຖານໂຄງລ່າງທາງຍຸດທະສາດທີ່ເຄີຍມີມາ ແລະ ອາດຈະເຮັດໃຫ້ການຕິດຕາມກວດກາຂອງພາກລັດອ່ອນແອລົງ.



# ການເລືອກຕັ້ງລັດຖະສະພາດານມາກ




(Xinhua) - ໜ່ວຍເລືອກຕັ້ງເປີດຂຶ້ນທົ່ວປະເທດດານມາກເມື່ອວັນອັງຄານທີ 24 ມີນາ, ຂະນະທີ່ຜູ້ມີສິດເລືອກຕັ້ງຫຼາຍກວ່າ 4.3 ລ້ານຄົນ ໄດ້ໄປລົງຄະແນນສຽງໃນການເລືອກຕັ້ງທົ່ວໄປ ທີ່ຈະຕັດສິນອົງປະກອບຂອງລັດຖະສະພາດານມາກ (Folketing) ແລະ ເປັນການວາງພື້ນຖານໃຫ້ແກ່ການເຈລະຈາເພື່ອສ້າງຕັ້ງລັດຖະບານຊຸດຕໍ່ໄປ; ໜ່ວຍເລືອກຕັ້ງເປີດຕັ້ງແຕ່ເວລາ 08:00-20:00 ໂມງ ຕາມເວລາທ້ອງຖິ່ນ.

ຜູ້ມີສິດເລືອກຕັ້ງ ຈະຕ້ອງເປັນພົນລະເມືອງດານມາກ, ອາຍຸຢ່າງໜ້ອຍ 18 ປີ ແລະ ເປັນຜູ້ຢູ່ອາໄສຖາວອນໃນລາຊະອານາຈັກດານມາກ ໂດຍມີຂໍ້ຍົກເວັ້ນບາງຢ່າງສໍາລັບຊາວດານມາກທີ່ອາໄສຢູ່ຕ່າງປະເທດ.

ການເລືອກຕັ້ງຄັ້ງນີ້ ຈະເລືອກຕັ້ງສະມາຊິກລັດຖະສະພາທັງໝົດ 179 ທີ່ນັ່ງ: 175 ທີ່ນັ່ງຈາກດານມາກ ແລະ ບ່ອນລະ 2 ທີ່ນັ່ງຈາກກຣີນແລນ (Greenland) ແລະ ໝູ່ເກາະຟາໂຣ (Faroe); ມີທັງໝົດ 12 ພັກການເມືອງ ທີ່ລົງສະໝັກຮັບເລືອກຕັ້ງທົ່ວປະເທດ ແລະ ຜູ້ມີສິດເລືອກຕັ້ງ ສາມາດລົງຄະແນນສຽງໄດ້ທັງໃຫ້ກັບພັກການເມືອງ, ຜູ້ສະໝັກລາຍບຸກຄົນໃນເຂດເລືອກຕັ້ງຂອງຕົນ ຫຼື ຜູ້ສະໝັກເອກະລາດ.

ນາຍົກລັດຖະມົນຕີເມດເຕ ເຟຣເດີຣິກເຊນ (Mette Frederiksen) ປະກາດວັນເລືອກຕັ້ງເມື່ອວັນທີ 26 ກຸມພາ ເຊິ່ງໄວກວ່າກໍານົດເວລາຕາມລັດຖະທໍາມະນູນຫຼາຍເດືອນ ຄື ວັນທີ 31 ຕຸລາ 2026.

ພັກສັງຄົມປະຊາທິປະໄຕ ຍັງເປັນພັກທີ່ໃຫຍ່ທີ່ສຸດໃນການເລືອກຕັ້ງຄັ້ງນີ້, ອີງຕາມຜົນການນັບຄະແນນເບື້ອງຕົ້ນຈາກສູນກາງທີ່ເປີດເຜີຍໃນຕອນເຊົ້າວັນພຸດທີ 25 ມີນາ; ແຕ່ທັງພັກຝ່າຍຊ້າຍ (ພັກສີແດງ) ແລະ ພັກຝ່າຍຂວາ (ພັກສີຟ້າ) ຕ່າງກໍບໍ່ໄດ້ຮັບສຽງສ່ວນຫຼາຍຢ່າງເດັດຂາດໃນ Folketing ເຊິ່ງເປັນລັດຖະສະພາແບບສະພາດຽວຂອງດານມາກ.

ຜົນການນັບຄະແນນສຽງຈາກກຣີນແລນ ແລະ ໝູ່ເກາະຟາໂຣ ຍັງບໍ່ສໍາເລັດ.

ຜົນການນັບຄະແນນເບື້ອງຕົ້ນຈາກສູນກາງສະແດງໃຫ້ເຫັນວ່າ ພັກສັງຄົມປະຊາທິປະໄຕ ໄດ້ຮັບຄະແນນສຽງປະມານ 21.9% ແລະ ໄດ້ 38 ທີ່ນັ່ງ, ຫຼຸດລົງ 12 ທີ່ນັ່ງ ຈາກການເລືອກຕັ້ງຄັ້ງກ່ອນ; ພັກປະຊາຊົນສັງຄົມນິຍົມ ໄດ້ 20 ທີ່ນັ່ງ, ຕາມມາດ້ວຍພັກເສລີນິຍົມແຫ່ງດານມາກ ໄດ້ 18 ທີ່ນັ່ງ, ພັນທະມິດເສລີນິຍົມ ແລະ ພັກປະຊາຊົນດານມາກ ໄດ້ພັກລະ 16 ທີ່ນັ່ງ.

ເມື່ອພິຈາລະນາຈາກຈໍານວນທີ່ນັ່ງໃນດານມາກໂດຍລວມ, ພັກຝ່າຍສີແດງໄດ້ 84 ທີ່ນັ່ງ, ທຽບກັບ 77 ທີ່ນັ່ງຂອງພັກຝ່າຍສີຟ້າ; ເນື່ອງຈາກສຽງສ່ວນຫຼາຍໃນລັດຖະສະພາຕ້ອງການ 90 ທີ່ນັ່ງ, ພັກສາຍກາງ (Moderates) ທີ່ໄດ້ 14 ທີ່ນັ່ງ ຈຶ່ງຄາດວ່າຈະມີບົດບາດສໍາຄັນໃນການເຈລະຈາສ້າງຕັ້ງລັດຖະບານທີ່ຈະເກີດຂຶ້ນ.

ຫຼັງຈາກການລົງຄະແນນສຽງ, ນາຍົກລັດຖະມົນຕີສິ່ງສັນຍານວ່າ ນາງພ້ອມທີ່ຈະຮັບຜິດຊອບຕໍ່ການເຈລະຈາທີ່ຈະເກີດຂຶ້ນ ແລະ ຈະພະຍາຍາມນໍາພາປະເທດຕໍ່ໄປພ້ອມທັງຍອມຮັບວ່າ ການສ້າງຕັ້ງລັດຖະບານໃໝ່ນັ້ນ ບໍ່ໜ້າຈະງ່າຍ.

ພາຍໃຕ້ລະບົບລັດຖະສະພາແບບຫຼາຍພັກຂອງດານມາກ, ການເລືອກຕັ້ງມັກນໍາໄປລັດຖະບານປະສົມ ຫຼື ລັດຖະບານສຽງສ່ວນໜ້ອຍຫຼາຍກວ່າການປົກຄອງໂດຍພັກດຽວ; ໃນຂະນະທີ່ການເຈລະຈາເພື່ອສ້າງຕັ້ງລັດຖະບານປະສົມ ອາດຈະດໍາເນີນຕໍ່ໄປອີກຫຼາຍອາທິດ.

# ສະພາຕໍ່າເນປານຊຸດໃໝ່ ສາບານຕົນເຂົ້າຮັບຕໍາແໜ່ງ




(Xinhua) - ສະມາຊິກສະພາຜູ້ແທນປະຊາຊົນ ຫຼື ສະພາຕໍ່າ ຊຸດໃໝ່ຂອງເນປານ ໄດ້ກ່າວຄໍາສາບານຕົນເຂົ້າຮັບຕໍາແໜ່ງ ແລະ ປະຕິຍານຄວາມຈົງຮັກພັກດີ ໃນພິທີທີ່ອາຄານບໍລິຫານໃຫຍ່ ສິງ ດູບາ (Singha Durbar) ເມື່ອວັນພະຫັດທີ 26 ມີນານີ້.

ອາຈຸນ ນາຊິງ ເຄຊີ (Arjun Narsingh KC) ສະມາຊິກສະພາຕໍ່າອາວຸໂສຈາກພັກ Nepali Congress ເປັນຜູ້ທໍາພິທີສາບານຕົນໃຫ້ແກ່ສະມາຊິກສະພາຕໍ່າຊຸດໃໝ່, ໂດຍ ເຄຊີ ເອງ ໄດ້ສາບານຕົນຕໍ່ໜ້າປະທານາທິບໍດີ ຣາມ ຈັນທຣາ ເປົາເດວ (Ram Chandra Poudel) ແຫ່ງເນປານ ເມື່ອວັນພຸດ.

ສະມາຊິກສະພາຕໍ່າ ຈໍານວນ 63 ຄົນ ກ່າວຄໍາສາບານຕົນດ້ວຍພາສາແມ່ຂອງຕົນແທນພາສາເນປານ.

ພັກການເມືອງ 6 ພັກ ແລະ ຜູ້ສະໝັກເອກະລາດ 1 ຄົນ ໄດ້ຮັບທີ່ນັ່ງໃນສະພາຕໍ່າໃນການເລືອກຕັ້ງເມື່ອວັນທີ 5 ມີນາຜ່ານມາ; ພັກ ຣັສຕຣິຢາ ສະວາຕັນຕຣາ (Rastriya Swatantra Party) ຫຼື ພັກເອກະລາດແຫ່ງຊາດ (National Independent Party) ກາຍເປັນພັກທີ່ໃຫຍ່ທີ່ສຸດ ໂດຍໄດ້ຮັບ 182 ຈາກທັງໝົດ 275 ທີ່ນັ່ງໃນສະພາຕໍ່າ.

ພິທີສາບານຕົນນີ້ຖືເປັນການເລີ່ມຕົ້ນຢ່າງເປັນທາງການຂອງວາລະລັດຖະສະພາໃໝ່.

# ລັດຖະສະພາ Algeria ອະນຸມັດການປັບປຸງລັດຖະທຳມະນູນ



(Xinhua) - ຕອນແລງວັນພຸດທີ 25 ມີນານີ້, ລັດຖະສະພາອານເຊຣີ ໄດ້ອະນຸມັດຢ່າງເປັນເອກະສັນ ໃຫ້ມີການປັບປຸງທາງເຕັກນິກຊຸດໜຶ່ງຂອງລັດຖະທຳມະນູນສະບັບປີ 2020 ໃນລະຫວ່າງກອງປະຊຸມໃຫຍ່ທີ່ຈັດຂຶ້ນທີ່ນະຄອນຫຼວງແອລເຈຍ (Algiers) ໂດຍການເປັນປະທານຂອງປະທານາທິບໍດີອັບເດລມາຈິດ ເຕບບູນ (Abdelmadjid Tebboune) ເຊິ່ງມີສະມາຊິກຈາກທັງສະພາສູງ ແລະ ສະພາຕໍ່າ ເຂົ້າຮ່ວມ.

ການປັບປຸງດັ່ງກ່າວ ມີຈຸດປະສົງເພື່ອປັບປຸງການປະຕິບັດໜ້າທີ່ຂອງສະຖາບັນ ແລະ ແກ້ໄຂຊ່ອງວ່າງທາງກົດໝາຍ ໂດຍບໍ່ມີຜົນກະທົບຕໍ່ສິດທິຂັ້ນພື້ນຖານ; ການປ່ຽນແປງທີ່ສຳຄັນລວມມີ: ການກຳນົດຄຸນວຸດທິການສຶກສາສຳລັບຜູ້ສະໝັກຮັບເລືອກຕັ້ງເປັນປະທານາທິບໍດີ, ການອະນຸຍາດໃຫ້ມີການເລືອກຕັ້ງທ້ອງຖິ່ນກ່ອນກຳນົດ, ການແກ້ໄຂອົງປະກອບຂອງສະພາຕຸລາການສູງສຸດ, ການຂະຫຍາຍອາຍຸການຂອງປະທານສະພາສູງເປັນຫົກປີ ແລະ ການຂະຫຍາຍອຳນາດຂອງອົງການເລືອກຕັ້ງ.

ຂໍ້ຄວາມທີ່ໄດ້ຮັບການປັບປຸງ ຄາດວ່າຈະຖືກເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ເພື່ອໃຫ້ມີຜົນບັງຄັບໃຊ້.

# ລັດຖະສະພາອີຣານ ເລີ່ມຂະບວນການອະນຸມັດແຜນການຄຸ້ມຄອງຊ່ອງແຄບຮໍມຸຊ



(Xinhua) - ທາສນິມ (Tasnim) ເຊິ່ງເປັນສຳນັກຂ່າວເຄິ່ງທາງການຂອງອີຣານ ລາຍງານເມື່ອວັນຈັນທີ 30 ມີນາຜ່ານມາວ່າສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາຂອງອີຣານ ໄດ້ເລີ່ມຕົ້ນຂະບວນການອະນຸມັດແຜນການຄຸ້ມຄອງຊ່ອງແຄບຮໍມຸສ (Strait of Hormuz) ຢ່າງສະຫຼາດ.

ອັບບາສກູດາຊີ(Abbas Goudarzi) ໂຄສົກຂອງຄະນະປະທານລັດຖະສະພາອີຣານກ່າວວ່າ ແຜນການໃໝ່ນີ້ ຖືກເພີ່ມເຂົ້າໃນວາລະກອງປະຊຸມຂອງສະພານິຕິບັນຍັດ ຫຼັງຈາກລວບລວມລາຍເຊັນຈາກສະມາຊິກລັດຖະສະພາຫຼາຍກວ່າ 250 ຄົນ (ລັດຖະສະພາມີທັງໝົດ 290 ທີ່ນັ່ງ), ແຜນການດັ່ງກ່າວມີເປົ້າໝາຍເພື່ອເພີ່ມຄວາມປອດໄພຂອງເສັ້ນທາງເດີນເຮືອແລະເກັບຄ່າທຳນຽມຈາກເຮືອໃນສະກຸນເງິນຣຽວ(rial)ຂອງອີຣານ.

ໃນວັນອາທິດທີ 29 ມີນາ, ອາລີເຣຊາຊາລິມີ(Alireza Salimi) ສະມາຊິກລັດຖະສະພາອາວຸໂສ ກ່າວວ່າ ແຜນການຮີບດ່ວນນີ້ ມີ 4 ຈຸດປະສົງຕົ້ນຕໍຄື: ຮັບປະກັນຄວາມປອດໄພໃນການຂົນສົ່ງ (ທາງທະເລ), ເກັບຄ່າທຳນຽມຈາກຜູ້ກໍ່ໃຫ້ເກີດມົນລະພິດຕໍ່ສິ່ງແວດລ້ອມ, ເກັບຄ່າທຳນຽມສຳລັບການບໍລິການນຳທາງ ແລະ ສ້າງຕັ້ງກອງທຶນພັດທະນາພາກພື້ນ.

ຄວາມຄືບໜ້ານີ້ ເກີດຂຶ້ນທ່າມກາງການຄວບຄຸມຊ່ອງແຄບຮໍມຸສຢ່າງເຂັ້ມງວດຂອງອີຣານ ເຊິ່ງນັບຕັ້ງແຕ່ທ້າຍເດືອນກຸມພາທີ່ຜ່ານມາ, ເຮືອທີ່ເຊື່ອມໂຍງກັບອິດສະຣາແອນ, ສະຫະລັດອາເມລິກາ ແລະ ພັນທະມິດຂອງພວກເຂົາ ຖືກຫ້າມບໍ່ໃຫ້ຜ່ານຊ່ອງແຄບນີ້.

# ອິນໂດເນເຊຍ ຊາດທຳອິດໃນອາຊຽນຫ້າມເດັກອາຍຸຕໍ່າກວ່າ 16 ປີໃຊ້ສື່ສັງຄົມ



(AP) - ອິນໂດເນເຊຍເປັນປະເທດທຳອິດໃນອາຊີຕາເວັນອອກສຽງໃຕ້ເຊິ່ງຫ້າມເດັກອາຍຸທີ່ຍັງບໍ່ເຖິງ 16 ປີ ໃຊ້ສື່ສັງຄົມອອນລາຍ, ກົດໝາຍທີ່ຫ້າມຜູ້ມີອາຍຸຕໍ່າກວ່າ 16 ປີ ເຂົ້າເຖິງສື່ສັງຄົມ ມີຜົນບັງຄັບໃຊ້ຢ່າງເປັນທາງການແລ້ວ ໃນວັນທີ 28 ມີນາຜ່ານມາ.

ລັດຖະບານໃຫ້ເຫດຜົນຂອງການອອກກົດໝາຍດັ່ງກ່າວວ່າກ່ຽວຂ້ອງກັບໄພຂົ່ມຂູ່ຈາກສື່ລາມົກອະນາຈານອອນລາຍ, ການຂົ່ມເຫັງທາງໄຊເບີ ແລະ ບັນຫາການຕິດອິນເຕີເນັດທ່າມກາງຄວາມກັງວົນທີ່ເພີ່ມຂຶ້ນທົ່ວໂລກ ກ່ຽວກັບຜົນກະທົບຂອງສື່ສັງຄົມທີ່ມີຕໍ່ສະຫວັດດີພາບຂອງເດັກ.

ພາກລັດຢໍ້າວ່າ ທຸກເວທີ (ແພລດຟອມ - platform) ທີ່ຍັງດຳເນີນກິດຈະການໃນອິນໂດເນເຊຍຕ້ອງ "ປັບປຸງຄຸນສົມບັດຂອງຜະລິດຕະພັນ ແລະ ບໍລິການໃຫ້ສອດຄ່ອງກັບກົດລະບຽບໂດຍທັນທີ" ແລະ ທຸກນິຕິບຸກຄົນທີ່ດຳ ເນີນທຸລະກິດໃນປະເທດ ຕ້ອງເຄົາລົບກົດໝາຍຂອງອິນໂດເນເຊຍ; ເຖິງແມ່ນມາດຕະການດັ່ງກ່າວອາດຈະສ້າງຄວາມບໍ່ສະດວກໃນເບື້ອງຕົ້ນ, ແຕ່ລັດຖະບານເຊື່ອວ່າເປັນບາດກ້າວທີ່ເໝາະສົມທ່າມກາງ "ພາວະສຸກເສີນທາງດິຈິຕອນ" ທີ່ສ້າງຄວາມກັງວົນໃຫ້ກັບຜູ້ປົກຄອງ.

# Sweden ສະເໜີຮ່າງກົດໝາຍເນລະເທດຜູ້ອົບພະຍົບ "ທີ່ດຳລົງຊີວິດຢ່າງບໍ່ຊື່ສັດ"



(GBNews) - ວັນທີ 24 ມີນານີ້, ລັດຖະບານສະວີເດັນ ຫຼື ຊູແອດ ກ່າວວ່າ ຈະສະເໜີຮ່າງກົດໝາຍທີ່ກຳນົດໃຫ້ຜູ້ອົບພະຍົບ ຕ້ອງປະຕິບັດຕາມ "ການດຳລົງຊີວິດຢ່າງສຸດຈະລິດ" ບໍ່ດັ່ງນັ້ນຈະຖືກເນລະເທດ; ລັດຖະບານຝ່າຍຂວາ ເຊິ່ງຂຶ້ນມາມີອຳນາດໃນປີ 2022 ໃຫ້ຄຳໝັ້ນສັນຍາວ່າຈະໃຊ້ມາດຕະການເຂັ້ມງວດກັບຜູ້ອົບພະຍົບ ລວມທັງກຳ ລັງພະຍາຍາມຊຸກຍູ້ການປະຕິຮູບຫຼາຍດ້ານຢ່າງວ່ອງໄວກ່ອນການເລືອກຕັ້ງສະພານິຕິບັນຍັດໃນເດືອນກັນຍານີ້.

ໂຢຮານ ຟອສເຊວ (Johan Forssell) ລັດຖະມົນຕີກະຊວງການຍ້າຍຖິ່ນຖານ ກ່າວວ່າ ການປະຕິບັດຕາມກົດໝາຍ ແລະ ລະບຽບການ ແມ່ນເລື່ອງປົກກະຕິ ໂດຍຫາກທ່ານບໍ່ສົນໃຈຕໍ່ການຊຳລະໜີ້, ບໍ່ປະຕິບັດຕາມຄຳສັ່ງຂອງທາງການ, ສໍ້ໂກງລະບົບສະຫວັດດີການ, ສໍ້ໂກງເພື່ອໃຫ້ໄດ້ຮັບໃບອະນຸຍາດພັກອາໄສໃນສະວີເດັນ, "ທ່ານກໍບໍ່ມີສິດທີ່ຈະຢູ່ທີ່ນີ້".

ຕົວຢ່າງອື່ນໆທີ່ລັດຖະບານຍົກຂຶ້ນໄດ້ແກ່: ການເຮັດວຽກໂດຍບໍ່ເສຍພາສີ ຫຼື ການບໍ່ຈ່າຍຄ່າປັບໃໝ.

ຂະນະດຽວກັນ, ລັດຖະບານຍັງສະເໜີໃຫ້ຍົກເລີກໃບອະນຸຍາດພັກອາໄສໃນສະຖານະການອື່ນໆທີ່ບໍ່ກ່ຽວຂ້ອງກັນເຊັ່ນ: ໃນກໍລະນີທີ່ຜູ້ອົບພະຍົບຖືກຮັບຮູ້ວ່າເປັນໄພຂົ່ມຂູ່ ຫຼື ຖ້າພົບວ່າພວກເຂົາຕົວະໃນໃບສະໝັກ.

ຫາກລັດຖະສະພາອະນຸມັດຮ່າງກົດໝາຍດັ່ງກ່າວ, ການປ່ຽນແປງນີ້ຈະມີຜົນບັງຄັບໃຊ້ໃນວັນທີ 13 ກໍລະກົດ 2026.

# Trump ລົງນາມຄຳສັ່ງສ້າງລາຍຊື່ຜູ້ມີສິດເລືອກຕັ້ງ ແລະ ຈຳກັດການລົງຄະແນນສຽງທາງໄປສະນີ



(Xinhua) - ປະທານາທິບໍດີ ໂດນັນ ທຣຳ ແຫ່ງສະຫະລັດ ໄດ້ລົງນາມໃນຄຳສັ່ງບໍລິຫານເມື່ອວັນອັງຄານທີ 31 ມີນາຜ່ານມາ ເພື່ອປ່ຽນຮູບແບບການລົງຄະແນນສຽງທາງໄປສະນີ ແລະ ຂະຫຍາຍບົດບາດຂອງລັດຖະບານກາງ ໃນການກວດສອບຄຸນສົມບັດຂອງຜູ້ມີສິດເລືອກຕັ້ງ, ເຊິ່ງເປັນການເຄື່ອນໄຫວທີ່ຄາດວ່າຈະປະເຊີນກັບສິ່ງທ້າທາຍທາງກົດໝາຍຢ່າງວ່ອງໄວ.

ຄຳສັ່ງດັ່ງກ່າວ ສັ່ງການໃຫ້ກະຊວງຄວາມໝັ້ນຄົງພາຍໃນ ຮ່ວມກັບອົງການປະກັນສັງຄົມ ສ້າງລາຍຊື່ພົນລະເມືອງສະຫະລັດທີ່ໄດ້ຮັບການຢືນຢັນແລ້ວອາຍຸ 18 ປີຂຶ້ນໄປ ໃນແຕ່ລະລັດ ແລະ ສົ່ງໃຫ້ເຈົ້າໜ້າທີ່ການເລືອກຕັ້ງຂອງລັດ; ນອກຈາກນີ້, ຍັງສັ່ງການໃຫ້ໜ່ວຍບໍລິການໄປສະນີ ຈຳກັດການຈັດສົ່ງບັດເລືອກຕັ້ງທາງໄປສະນີ ແລະ ບັດເລືອກຕັ້ງລ່ວງໜ້າ ສະເພາະຜູ້ມີສິດເລືອກຕັ້ງທີ່ຢູ່ໃນລາຍຊື່ທີ່ລັດອະນຸມັດ ແລະ ກຳນົດໃຫ້ໃຊ້ຊອງຈົດໝາຍເລືອກຕັ້ງຢ່າງເປັນທາງການທີ່ມີບາໂຄດ (barcode) ຕິດຕາມ.

ຜູ້ຊ່ຽວຊານດ້ານກົດໝາຍ ແລະ ເຈົ້າໜ້າທີ່ການເລືອກຕັ້ງ ກ່າວວ່າ ຄຳສັ່ງດັ່ງກ່າວອາດຂັດກັບລັດຖະທຳມະນູນ ເນື່ອງຈາກລັດຖະທຳມະນູນສະຫະລັດໃຫ້ອຳນາດຫຼັກແກ່ລັດຕ່າງໆໃນການບໍລິຫານຈັດການການເລືອກຕັ້ງ, ຂະນະທີ່ລັດຖະສະພາ ກຳນົດລະບຽບການຂອງລັດຖະບານກາງບາງຢ່າງ.

ກຸ່ມປົກປ້ອງສິດທິໃນການເລືອກຕັ້ງ ແລະ ເຈົ້າໜ້າທີ່ພັກເດໂມແຄຣັດໃນລະດັບລັດຕ່າງກໍສົ່ງສັນຍານຢ່າງວ່ອງໄວເຖິງແຜນການທີ່ຈະຍື່ນຟ້ອງຮ້ອງຄັດຄ້ານຄຳສັ່ງດັ່ງກ່າວຕໍ່ສານ.

ຄຳສັ່ງນີ້ ແມ່ນຄວາມພະຍາຍາມຫຼ້າສຸດຂອງ ທຣຳ ທີ່ຈະປ່ຽນແປງຂັ້ນຕອນການເລືອກຕັ້ງ; ໃນປີ 2025, ເຂົາໄດ້ລົງນາມໃນຄຳສັ່ງບໍລິຫານທີ່ມຸ່ງເປົ້າໄປທີ່ການເຂັ້ມງວດຂໍ້ກຳນົດການລົງທະບຽນຜູ້ມີສິດເລືອກຕັ້ງ ແລະ ຈຳກັດການນັບຄະແນນສຽງທີ່ສົ່ງມາຊ້າ, ເຖິງແມ່ນວ່າຂໍ້ກຳນົດທີ່ສຳຄັນບາງຢ່າງ ຈະຖືກສານລັດຖະບານກາງສັ່ງໂຈະກໍຕາມ.

# ລັດຖະສະພາອິດສະຣາແອນ ຜ່ານງົບປະມານເປັນສະຖິຕິສູງສຸດ ແລະ ກົດໝາຍປະຫານຊີວິດຊາວປາແລັດສະຕິນທີ່ມີຄວາມຜິດກໍ່ການຮ້າຍ



(Xinhua) - ວັນຈັນທີ 30 ມີນາຜ່ານມາ, ລັດຖະສະພາອິດສະຣາແອນ ຫຼື Knesset (ມີທັງໝົດ 120 ທີ່ນັ່ງ) ໄດ້ອະນຸມັດງົບປະມານແຫ່ງລັດ ປີ 2026 ໃນວາລະການສະເໜີຮ່າງມະຕິຄັ້ງສຸດທ້າຍ, ຫຼີກລ່ຽງການລົ້ມລະລາຍຂອງລັດຖະບານ ແລະ ການເລືອກຕັ້ງກ່ອນກຳນົດ, ຕາມລາຍງານຂອງສື່ມວນຊົນທ້ອງຖິ່ນ.

ຮ່າງງົບປະມານລາຍຈ່າຍລວມທັງໝົດ 850.6 ຕື້ເຊເກລ (shekel) ປະມານ 271 ຕື້ໂດລາ ຜ່ານການລົງມະຕິດ້ວຍຄະແນນ 62 ຕໍ່ 55 ສຽງ, ຖືເປັນງົບປະມານແຫ່ງລັດທີ່ໃຫຍ່ທີ່ສຸດໃນປະຫວັດສາດຂອງອິດສະຣາແອນ; ກະຊວງປ້ອງກັນປະເທດພຽງກະຊວງດຽວ ຈະໄດ້ຮັບຫຼາຍກວ່າ 142 ຕື້ເຊເກລ (ປະມານ 45 ຕື້ໂດລາ) ເຊິ່ງເປັນການຈັດສັນງົບປະມານຄັ້ງໃຫຍ່ທີ່ສຸດໃນປະຫວັດສາດເຊັ່ນກັນ.

ພາຍໃຕ້ກົດໝາຍຂອງອິດສະຣາແອນ, ຫາກບໍ່ສາມາດຜ່ານງົບປະມານພາຍໃນວັນທີ 31 ມີນາຈະເຮັດໃຫ້ລັດຖະບານລົ້ມລະລາຍໂດຍອັດຕະໂນມັດ ແລະ ບັງຄັບໃຫ້ມີການເລືອກຕັ້ງກ່ອນກຳນົດພາຍໃນປະມານ 90 ວັນ.

ການເລືອກຕັ້ງສະພານິຕິບັນຍັດຂອງອິດສະຣາແອນມີກຳນົດຈັດຂຶ້ນໃນເດືອນຕຸລານີ້.

ໃນວັນດຽວກັນ, ລັດຖະສະພາໄດ້ຜ່ານກົດໝາຍສະບັບໃໝ່ທີ່ຈະອະນຸຍາດໃຫ້ປະຫານຊີວິດຊາວປາແລັດສະຕິນທີ່ຖືກຕັດສິນວ່າມີຄວາມຜິດໃນການກໍ່ການຮ້າຍຕໍ່ຊາວອິດສະຣາແອນ ທ່າມກາງສຽງວິພາກວິຈານເຖິງການຈຳແນກ, ຕາມການລາຍງານຂອງສຳນັກຂ່າວ AFP.

ສະມາຊິກລັດຖະສະພາ 62 ຄົນ ລວມທັງນາຍົກລັດຖະມົນຕີ ເບນຈາມິນ ເນທັນຢາຮູ (Benjamin Netanyahu) ລົງຄະແນນສຽງເຫັນດີ, ຂະນະທີ່ 48 ຄົນລົງຄະແນນສຽງຄັດຄ້ານຮ່າງກົດໝາຍດັ່ງກ່າວ ເຊິ່ງໄດ້ຮັບການສະໜັບສະໜູນໂດຍລັດຖະມົນຕີກະຊວງຄວາມໝັ້ນຄົງແຫ່ງຊາດ ອິຕາມາຣ໌ ເບນ-ກວີຣ໌ (Itamar Ben-Gvir), ສະມາຊິກຄົນໜຶ່ງງົດອອກສຽງ ແລະ ສະມາຊິກລັດຖະສະພາທີ່ເຫຼືອບໍ່ໄດ້ເຂົ້າຮ່ວມກອງປະຊຸມ.

ກົດໝາຍນີ້ ຈະເຮັດໃຫ້ໂທດປະຫານຊີວິດເປັນໂທດເລີ່ມຕົ້ນ ສຳລັບຊາວປາແລັດສະຕິນໃນເຂດ ເວສຕ໌ ແບງກ໌ (West Bank) ທີ່ຖືກຕັດສິນວ່າມີຄວາມຜິດໃນການກໍ່ເຫດໂຈມຕີໂດຍເຈດຕະນາ ທີ່ເຮັດໃຫ້ມີຜູ້ເສຍຊີວິດ ຕາມທີ່ສານທະຫານອິດສະຣາແອນຖືວ່າເປັນ "ການກໍ່ການຮ້າຍ"; ຂະນະດຽວກັນ, ໂທດອາດຫຼຸດລົງເຫຼືອຕັດອິດສະລະພາບຕະຫຼອດຊີວິດ "ໃນສະຖານະການພິເສດ", ຂະນະທີ່ຊາວປາແລັດສະຕິນໃນເຂດເວສຕ໌ແບງກ໌ຈະຖືກພິຈາລະນາຄະດີໂດຍສານທະຫານຂອງອິດສະຣາແອນໂດຍອັດຕະໂນມັດ.

ສະພາເອີຣົບ (Council of Europe) ເຕືອນວ່າການອອກກົດໝາຍສະບັບນີ້ ແມ່ນ "ການຖອຍຫຼັງ" ທີ່ຮ້າຍແຮງ" ເຊິ່ງກົງກັນຂ້າມກັບສະຫະລັດອາເມລິກາ ທີ່ລະບຸວ່າຕົນເຄົາລົບສິດອະທິປະໄຕຂອງອິດສະຣາແອນ ໃນການກຳນົດກົດໝາຍ ແລະ ການລົງໂທດ.

ພາຍໃຕ້ກົດໝາຍ, ໃນສານອາຍາຂອງອິດສະຣາແອນ, ຜູ້ໃດກໍຕາມທີ່ເຈດຕະນາເຮັດໃຫ້ຜູ້ອື່ນເສຍຊີວິດ ໂດຍມີເປົ້າໝາຍທີ່ຈະທຳຮ້າຍພົນລະເມືອງ ຫຼື ຜູ້ຢູ່ອາໄສຊາວອິດສະຣາແອນ ດ້ວຍເຈດຕະນາທີ່ຈະຢຸດຕິການມີຢູ່ຂອງລັດອິດສະຣາແອນ ຈະຕ້ອງຖືກຕັດສິນປະຫານຊີວິດ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ໂດຍສານອາຍາອິດສະຣາແອນ ຈະພິຈາລະນາຄະດີພົນລະເມືອງຂອງຕົນ ລວມທັງພົນລະເມືອງ ແລະ ຜູ້ຢູ່ອາໄສຊາວປາແລັດສະຕິນ ໃນເຢຣູຊາເລມ (Jerusalem) ຕາເວັນອອກ.

ກົດໝາຍກຳນົດວິທີການປະຫານຊີວິດເປັນ "ການແຂວນຄໍ" ໂດຍລະບຸວ່າ ຈະຕ້ອງປະຕິບັດພາຍໃນ 90 ວັນນັບຈາກວັນຕັດສິນ ແລະ ສາມາດເລື່ອນອອກໄປໄດ້ສູງສຸດ 180 ວັນ.

# ສະພາ Burkina Faso ຮັບຮອງ ທຳມະນູນປະຕິວັດສະບັບໃໝ່




(Xinhua) - ກະຊວງຍຸຕິທຳຂອງບວກກິນາຟາໂຊ ປະກາດເມື່ອວັນສຸກທີ 27 ມີນາຜ່ານມາວ່າ ສະພານິຕິບັນຍັດຊົ່ວຄາວ (Transitional Legislative Assembly - TLA) ໄດ້ລົງມະຕິຮັບຮອງທຳມະນູນປະຕິວັດ (Revolution Charter) ສະບັບໃໝ່ ຢ່າງເປັນເອກະສັນໂດຍການລົງຄະແນນສຽງປິດລັບ ເຊິ່ງຈະປ່ຽນແທນທຳມະນູນຊົ່ວຄາວສະບັບເດີມ ເມື່ອວັນທີ 14 ຕຸລາ 2022 ແລະ ສະບັບປັບປຸງເມື່ອວັນທີ 25 ພຶດສະພາ 2024.

ທຳມະນູນປະຕິວັດສະບັບໃໝ່ ໄດ້ບັນຍັດການປະຕິວັດປະຊາຊົນກ້າວໜ້າ ໄວ້ໃນຂອບສະຖາບັນຢ່າງຖືກຕ້ອງຕາມກົດໝາຍ ແລະ ໄດ້ລວມເອົາຄຸນຄ່າຂອງການປ້ອງກັນປະເທດ, ຄວາມມຸ່ງໝັ້ນຮັກຊາດຂອງປະຊາຊົນ, ແລະ ອະທິປະໄຕຂອງຊາດ ໄວ້ໃນຄຳນຳອີກດ້ວຍ.

ສະຖາບັນຕ່າງໆຂອງປະເທດ ໄດ້ຮັບການກຳນົດຊື່ໃໝ່, ລວມທັງ "ລັດຖະບານ" ແລະ "ສະພານິຕິບັນຍັດປະຊາຊົນ" (People's Legislative Assembly - PLA) ໂດຍ PLA ຈະປ່ຽນແທນ TLA ໂດຍອັດຕະໂນມັດ, ໃນຂະນະທີ່ອົງປະກອບ "ພັກການເມືອງ ແລະ ຂະບວນການທາງການເມືອງ" ພາຍໃນສະພານິຕິບັນຍັດ ຈະຖືກຍົກເລີກ ແລະ ຈັດສັນທີ່ນັ່ງຄືນໃໝ່.

ເນື້ອໃນຍັງສະທ້ອນໃຫ້ເຫັນເຖິງການຈັດລະບຽບອານາເຂດຄືນໃໝ່ ໂດຍລວມເອົາແຄວ້ນທີ່ສ້າງຕັ້ງຂຶ້ນໃໝ່ເຂົ້າໃນການເປັນຕົວແທນລະດັບຊາດ ແລະ ຊີ້ແຈງຂັ້ນຕອນການປັບປຸງທຳມະນູນໃຫ້ຊັດເຈນຍິ່ງຂຶ້ນ.

## ເຝົ້າໄວ້ ໄດ້ຂີດຂຽນ

# ຕ້ານການສໍ້ລາດບັງຫຼວງ ແລະ ສິນບົນ ຢ່າງມີຈຸດສຸມ

❖ ວິເສດ ສະແຫວງສຶກສາ

ໃນໄລຍະຫຼາຍໆປີຜ່ານມາ, ຜູ້ຂຽນໄດ້ສັງລວມເອົາບົດຄວາມ, ບົດຂ່າວ ທັງຈາກແຫຼ່ງຂ່າວພາຍໃນ ແລະ ຕ່າງປະເທດ ກ່ຽວກັບບັນຫາສໍ້ລາດບັງຫຼວງ ແລະ ໄດ້ພົບວ່າຂ່າວກ່ຽວກັບມາດຕະການຕ້ານການສໍ້ລາດບັງຫຼວງ, ການໃຊ້ຈ່າຍຟຸມເຟືອຍ ສ່ວນໃຫຍ່ອອກມາຈາກ ສປຈີນ, ຫວຽດນາມ, ສ.ເກົາຫຼີ, ສິງກະໂປ ແລະ ມາເລເຊຍ ກໍເລີຍສະຫຼຸບເອົາເອງວ່າທາງການຂອງ 5 ປະເທດນີ້ ເອົາຈິງເອົາຈັງກັບການປາບປາມົດການຫຍໍ້ທໍ້ດັ່ງກ່າວ; ສໍາລັບບົດນີ້, ຜູ້ຂຽນຂໍຍົກສະເພາະແຕ່ເລື່ອງການຕ້ານການສໍ້ລາດບັງຫຼວງ, ການໃຫ້-ຮັບສິນບົນ ຢູ່ ສ.ເກົາຫຼີ ຂ່າວໃຫຍ່ດັງໄກກ່ຽວກັບບັນຫາຕ້ານການສໍ້ລາດບັງຫຼວງ ກໍຄືການຕ້ານສິນບົນທີ່ມີຄວາມເຂັ້ມຂຸ້ນທີ່ສຸດ ໂດຍເລີ່ມແຕ່ປີ 2016 ປີທີ່ທາງການຂອງປະເທດນີ້ ໄດ້ມີມາດຕະການຕ້ານການຮັບສິນບົນໃນກຸ່ມພະນັກງານຂັ້ນສູງ ໂດຍສະເພາະແມ່ນຈໍາພວກທີ່ເຮັດວຽກໃນຂົງເຂດເກັບພາສີແລະໃນຂົງເຂດທີ່ມີສິດອໍານາດໃນການອະນຸມັດງົບປະມານ. ໃນວັນທີ 18 ກັນຍາ 2016 ກົດໝາຍຕ້ານການຮັບສິນບົນໄດ້ຖືກປະກາດໃຊ້ຢ່າງເປັນທາງການ, ກົດໝາຍໃສ່ຊື່ວ່າ: ກົດໝາຍ ກິມ ຢັງຣັນ (Kim Young-ran) ຕາມຊື່ຂອງອະດີດຫົວໜ້າກໍາມາທິການຕ້ານການສໍ້ລາດບັງຫຼວງ ແລະ ສິດທິພົນລະເມືອງ, ທ່ານ ກິມ ຢັງຣັນ ນີ້ລະ ເປັນເຈົ້າການນໍາພາການສ້າງກົດໝາຍສະບັບນີ້. ໃນປີ 2016 ພະນັກງານລັດໃນ ສ.ເກົາຫຼີ ມີປະມານ 4 ລ້ານຄົນ ຕໍ່ພົນລະເມືອງກວ່າ 50 ລ້ານຄົນ; ໃນເວລານັ້ນ, ວ່າກັນວ່າກົດໝາຍສະບັບນີ້ ລົງເລິກຄວບຄຸມພະນັກງານລັດຈໍານວນນີ້ແຫຼະ ໂດຍສະເພາະຄວບຄຸມການ "ກິນ-ດື່ມ" ທີ່ເຫຼົ່ານັກທຸລະກິດໃຊ້ເປັນສິນບົນເພື່ອແລກກັບຄວາມສະດວກຈາກພະນັກງານຂອງລັດ. ຂ່າວບອກວ່າການ "ລ້ຽງເຫຼືອເກືອອິ່ມ" ນີ້ ໄດ້ກາຍເປັນເຄື່ອງມືຂອງບັນດານັກທຸລະກິດ ໃນການຊື້ຈ້າງບັນດາພະນັກງານທີ່ມີອິດທິພົນ ມີ "ລາຍເຊັນງາມໆ!" ກົດໝາຍໄດ້ກໍານົດຫ້າມພະນັກງານ ຫຼື ຜົວເມຍ-ສາມີຂອງຕົນ ໄປຮ່ວມຮັບປະທານອາຫານທີ່ນັກທຸລະກິດ ຫຼື ຄົນທາງນອກ ອອກເງິນຈ່າຍແຕ່ຈໍານວນ 30,000 ວອນຂຶ້ນໄປ (ປະມານ 27.42 ໂດລາ) ທີ່ມີເງື່ອນງໍາວ່າເປັນການຊື້ຈ້າງ; ນອກຈາກນັ້ນ, ຍັງຫ້າມພະນັກງານຮັບຂອງຂວັນທີ່ມີມູນຄ່າເກີນກວ່າ50,000ວອນ ຈະຖືກຖືວ່າເປັນການຮັບສິນບົນ. ໃນກໍລະນີມີຜູ້ລະເມີດ, ຜູ້ກ່ຽວກໍຈະຖືກປັບໃໝດັ່ງນີ້: ເອົາມູນຄ່າອາຫານຄັ້ງທີ 2 ຫາຄັ້ງທີ 5 ທີ່ຄົນທາງນອກຈ່າຍໃຫ້ ມາບວກເຂົ້າກັນລວມເປັນຄ່າປັບໃໝ, ແຕ່ຖ້າລວມກັນແລ້ວ ມີມູນຄ່າກວ່າ 1 ລ້ານວອນ, ຜູ້ຮັບສິນບົນໃນຮູບລ້ຽງອາຫານ ກໍຈະໄດ້ຮັບໂທດທາງອາຍາຄືຕິດຄຸກສູງສຸດ 3 ປີ.

ສ່ວນຢູ່ມາເລເຊຍນັ້ນ ມາດຕະການຕ້ານການສໍ້ລາດບັງຫຼວງ ແລະ ຮັບສິນບົນນັ້ນ ໄດ້ກໍານົດຫຼາຍໆຂໍ້ຫ້າມ ໃນນັ້ນລວມທັງຫ້າມພະນັກງານລັດອອກໄປຫຼິ້ນກິລາຕີກັອບຢູ່ຕ່າງປະເທດ ເຖິງແມ່ນວ່າພະນັກງານດັ່ງກ່າວບໍ່ມີພຶດຕິກໍາສໍ້ລາດບັງຫຼວງກໍຕາມ (ຂ່າວໜັງສືພິມລາວພັດທະນາ 5 ມັງກອນ 2017) ຂ່າວບອກວ່າຂໍ້ຫ້າມນີ້ ກໍານົດໂດຍຄະນະກໍາມະການຕ້ານການສໍ້ລາດບັງຫຼວງຂອງມາເລເຊຍ; ໃນໄລຍະຜ່ານມາ, ທາງຄະນະກໍາມະການໄດ້ໃຫ້ຮູ້ວ່າ: ເຄີຍມີເຈົ້າໜ້າທີ່ລັດຂັ້ນສູງ ສວຍໂອກາດໃຊ້ຕໍາແໜ່ງໜ້າທີ່ເພື່ອສວຍໂອກາດຫາປະໂຫຍດເຂົ້າໃສ່ຕົນ ໂດຍເອົາກິລາຕີກັອບຢູ່ຕ່າງປະເທດເປັນສາກບັງໜ້າເພື່ອໄປພົບປະຕິດຕໍ່ເຂົ້າກັບນັກທຸລະກິດເຊິ່ງເປັນຜູ້ອອກເງິນຄ່າເດີນທາງ, ຄ່າອາຫານ ແລະ ຄ່າພັກເຊົາ. ນີ້ແມ່ນຮູບການໃຫ້ສິນບົນ, ຊື້ຈ້າງ ຈອບອອຍທີ່ເປັນອັນຕະລາຍຢ່າງຍິ່ງ.




*#ບ່າວກະບື*

**ທ່ານໝໍ:** "ເຮົາຮູ້ສຶກເສຍໃຈທີ່ຈະບອກໃຫ້ທ່ານຊາບວ່າ ໝາໂຕທີ່ກັດທ່ານນັ້ນເປັນບ້າ"

**ຄົນເຈັບ:** "ຂໍປາກກາກັບເຈ້ຍແດ່ທ່ານໝໍ"

**ທ່ານໝໍ:** "ທ່ານຊິຂຽນຈົດໝາຍແມ່ນບໍ່?"

**ຄົນເຈັບ:** "ບໍ່ແມ່ນຈັກດີ້, ເຮົາຊິຈົດບັນຊີຄົນຈໍາພວກທີ່ເຮົາຕ້ອງການກັດ"

*# BAOKBU*

**DOCTOR:** "I'm sorry to tell you this, but the dog that bit you has rabies"

**PATIENT:** "Please give me a pen and paper"

**DOCTOR:** "Are you thinking of writing a letter?"

**PATIENT:** "Of cours not, I'm ging to make a list of all the people I want to bite"




## ສໍາເລັດ...

(ຕໍ່ຈາກໜ້າ 1)

ການເປັນປະທານຂອງທ່ານ ສອນທະນູ ທໍາມະວົງ ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ; ມີທ່ານ ກອງແກ້ວ ໄຊສົງຄາມ ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາການນໍາຂັ້ນສູງ ແລະ ອະດີດການນໍາຂັ້ນສູງຂອງພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 11, ສະມາຊິກສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພາກທຸລະກິດ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນຕ່າງໆຂອງແຂວງ ດັ່ງນີ້:

1. ຮັບຟັງລາຍງານຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ V.

2. ເລືອກຕັ້ງຕໍາແໜ່ງສໍາຄັນຕ່າງໆຂອງອົງການອໍານາດລັດຂັ້ນທ້ອງຖິ່ນ ແລະ ຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ດັ່ງນີ້:

1) ຕໍາແໜ່ງ ແລະ ກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ຄື:

- ທ່ານ ສອນທະນູ ທໍາມະວົງ ເປັນປະທານສະພາປະຊາຊົນແຂວງ;

- ຮອງປະທານສະພາປະຊາຊົນແຂວງ ຈໍານວນ 2 ທ່ານ: ທ່ານ ໄຊອໍາພອນ ສີຫາວົງ ແລະ ທ່ານ ນາງ ຟອງສະໝຸດ ພົງວິຈິດ;

- ກໍາມະການຄະນະປະຈໍາສະພາປະຊາຊົນແຂວງ ຈໍານວນ 4 ທ່ານ:

+ ທ່ານ ນາງ ຂັນທອງ ພັນທະຈັກ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

+ ທ່ານ ຄໍາປຸ່ນ ສີຫາລາດ ເປັນປະທານຄະນະກໍາມະການເສດຖະກິດ, ການເງິນແລະສິ່ງແວດລ້ອມ;

+ ທ່ານ ພັທ. ໄຊຍະສຸກ ຫຼຽນຕະກຸນເປັນປະທານຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທໍາ;

+ ທ່ານ ນາງ ພຶດສະໄໝ ແກ້ວວິເສດ ເປັນປະທານຄະນະກໍາມະການວັດທະນະທໍາ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ.

-ຮອງປະທານຄະນະກໍາມະການແລະຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ:

+ ຮອງປະທານຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທໍາ ຈໍານວນ 2 ທ່ານ: ທ່ານ ບຸນທົງ ໄຊຍະສານ ແລະ ທ່ານ ແກ້ວອຸດອນ ເມືອງວົງ;

+ ຮອງປະທານຄະນະກໍາມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ຈໍານວນ 2 ທ່ານ: ທ່ານ ລໍາໄພ ພັນປະດິດ ແລະ ທ່ານ ວອນວິໄລ ສີມບັດມູນວົງ;

+ ຮອງປະທານຄະນະກໍາມະການວັດທະນະທໍາ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ຈໍານວນ 2 ທ່ານ: ທ່ານ ລັດຕະນະພຣະສະວັດ ແລະ ທ່ານ ລິນທອງ ອິນທິລາດ;

+ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຈໍານວນ 2 ທ່ານ: ທ່ານ ທິລະພົງ ຈັນຕາ ແລະ ທ່ານ ນາງ ແສງເງິນ ຊາມຸນຕີ.

2) ຮັບຮອງເອົາທ່ານ ສົມສິດ ແສງອາພອນ ກໍາມະການປະຈໍາພັກແຂວງ ເປັນປະທານອົງການກວດກາລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງແຂວງ.

3. ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ຂອງແຂວງ.

4. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ.

5. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ.

6. ຮັບຮອງເອົາແຜນການ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ.

7. ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກໍາ 5 ປີ (2026-2030).

ກອງປະຊຸມຍັງໄດ້ຮັບຟັງການລາຍງານ, ອະທິບາຍ, ຊີ້ແຈງຈາກທ່ານປະທານຄະນະກໍາມະການປົກຄອງແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງແລະພາກສ່ວນທີ່ກ່ຽວຂ້ອງ; ໃນໄລຍະດໍາເນີນກອງປະຊຸມ ໄດ້ມີປະຊາຊົນສົ່ງຄໍາຄິດຄໍາເຫັນຜ່ານໂທລະສັບສາຍດ່ວນລວມທັງໝົດ5ສາຍ, 4 ບັນຫາ ເຊິ່ງໄດ້ລາຍງານໃຫ້ອົງການປົກຄອງແຂວງ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

**ຜູ້ຊີ້ນໍາ**
ທ່ານ ສົງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພຶດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ